ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ　　　　　　　　　　　　　　　　　ເລກທີ 279 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 20-12-2010

# ລັດຖະດຳລັດ

## ຂອງປະທານປະເທດ

### ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍສະພາແຫ່ງຊາດ**

**ສະບັບປັບປຸງ.**

~~~~~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດ ໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 134/ສພຊ, ລົງວັນທີ 15 ທັນວາ 2010 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 74/ຄປຈ, ລົງວັນທີ 16 ທັນວາ 2010.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*ມາດຕາ 1* : ປະກາດໃຊ້ກົດໝາຍວ່າດ້ວຍ ສະພາແຫ່ງຊາດ ສະບັບປັບປຸງ.

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ
~~~~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ ເລກທີ 134 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ
## ກົດໝາຍວ່າດ້ວຍ ສະພາແຫ່ງຊາດ ສະບັບປັບປຸງ

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ສະບັບປັບປຸງ ໃນວາລະປະຊຸມຕອນເຊົ້າຂອງວັນທີ 15 ທັນວາ 2010,

### ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1.</u> ຮັບຮອງເອົາກົດໝາຍວ່າດ້ວຍ ສະພາແຫ່ງຊາດ ສະບັບປັບປຸງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫລາຍ.

<u>ມາດຕາ 2.</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 15 ທັນວາ 2010

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ ປະທານ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------------

ສະພາແຫ່ງຊາດ

ເລກທີ 04 /ສພຊ
ນະຄອນຫລວງວຽງຈັນ 15 ທັນວາ 2010

# ກົດໝາຍ
# ວ່າດ້ວຍສະພາແຫ່ງຊາດ

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1(ປັບປຸງ). ຈຸດປະສົງ**

ກົດໝາຍ ສະບັບນີ້ ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ ເພື່ອຮັບປະກັນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ມີຄຸນນະພາບ ແລະ ປະສິດທິພາບດີຂຶ້ນ, ແນໃສ່ເພີ່ມທະວີຄວາມສັກສິດແຫ່ງການຄຸ້ມຄອງເສດຖະກິດ-ສັງຄົມ ຂອງອຳນາດລັດ, ປະກອບສ່ວນສ້າງ, ປັບປຸງ ອຳນາດລັດຕາມທິດສ້າງລັດແຫ່ງກົດໝາຍ ໃຫ້ກາຍເປັນລັດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ ຢ່າງແທ້ຈິງ.

**ມາດຕາ 2(ປັບປຸງ). ທີ່ຕັ້ງ ແລະ ພາລະບົດບາດຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ແມ່ນ ໜຶ່ງໃນອົງການອຳນາດແຫ່ງລັດ ຊຶ່ງໄດ້ຮັບການເລືອກຕັ້ງໂດຍກົງຈາກປະຊາຊົນ, ມີພາລະບົດບາດເປັນອົງການຕົວແທນແຫ່ງສິດອຳນາດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ, ເປັນອົງການນິຕິບັນຍັດ, ຕົກລົງບັນດາບັນຫາພື້ນຖານຂອງປະເທດຊາດ ແລະ ເປັນອົງການຕິດຕາມກວດກາການເຄື່ອນໄຫວຂອງອົງການອຳນາດແຫ່ງລັດຂັ້ນຕ່າງໆ ໃນການປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ມະຕິຕົກລົງ ຂອງສະພາແຫ່ງຊາດ.

**ມາດຕາ 3(ປັບປຸງ). ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ**

**ສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້ :**

1. ພິຈາລະນາ ແລະ ຮັບຮອງ ການສ້າງ, ປັບປຸງ, ຍົກເລີກ, ລົບລ້າງ ລັດຖະທຳມະນູນ ແລະ ກົດໝາຍ;
2. ພິຈາລະນາ, ຮັບຮອງ, ປ່ຽນແປງ ແຜນການສ້າງ ແລະ ປັບປຸງກົດໝາຍ ຕະຫລອດ ອາຍຸການຂອງຕົນ;
3. ພິຈາລະນາ, ຮັບຮອງ ການກຳນົດ, ການປ່ຽນແປງ, ການຍົກເລີກ, ການລົບລ້າງ ອັດຕາພາສີ ແລະ ສ່ວຍສາອາກອນ;
4. ພິຈາລະນາ, ຮັບຮອງ ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ທິດທາງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດໃນຕໍ່ໜ້າ;
5. ພິຈາລະນາ, ຮັບຮອງ ບົດລາຍງານການເຄື່ອນໄຫວ ແລະ ທິດທາງແຜນການເຄື່ອນໄຫວໃນຕໍ່ໜ້າ ຂອງສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ;
6. ພິຈາລະນາ, ຮັບຮອງ ບົດລາຍງານການເຄື່ອນໄຫວ, ທິດທາງແຜນການເຄື່ອນໄຫວໃນຕໍ່ໜ້າ ແລະ ບົດລາຍງານຜົນການກວດສອບ ກ່ຽວກັບການສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ ຂອງອົງການກວດສອບແຫ່ງລັດ;
7. ເລືອກຕັ້ງ, ປົດຕຳແໜ່ງ ປະທານ, ຮອງປະທານ, ກຳມະການຄະນະປະຈຳສະພາແຫ່ງຊາດ;
8. ພິຈາລະນາ, ຮັບຮອງ ການສ້າງຕັ້ງ, ປ່ຽນແປງ, ຍຸບເລີກ ໂຄງປະກອບກົງຈັກຂອງສະພາແຫ່ງຊາດ;
9. ພິຈາລະນາ, ຮັບຮອງ ການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ບັນດາປະທານ, ຮອງປະທານກຳມາທິການ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;
10. ພິຈາລະນາ, ຮັບຮອງ ການສ້າງຕັ້ງ, ຍຸບເລີກ ຄະນະລັດຖະສະພາສາກົນຂອງສະພາແຫ່ງຊາດ ຕາມການສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ;
11. ເລືອກຕັ້ງ, ປົດຕຳແໜ່ງປະທານປະເທດ ແລະ ຮອງປະທານປະເທດຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;
12. ພິຈາລະນາ, ຮັບຮອງ ການແຕ່ງຕັ້ງ, ປົດຕຳແໜ່ງນາຍົກລັດຖະມົນຕີ ຕາມການສະເໜີຂອງປະທານປະເທດ;
13. ພິຈາລະນາ, ຮັບຮອງ ໂຄງປະກອບກົງຈັກຂອງລັດຖະບານ, ການແຕ່ງຕັ້ງ, ການຍົກຍ້າຍ, ການປົດຕຳແໜ່ງບັນດາ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ຕາມການສະເໜີຂອງນາຍົກລັດຖະມົນຕີ;

14. ເລືອກຕັ້ງ, ປົດຕຳແໜ່ງປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕາມການສະເໜີຂອງປະທານປະເທດ;
15. ເລືອກຕັ້ງ, ປົດຕຳແໜ່ງ ປະທານອົງການກວດສອບແຫ່ງລັດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;
16. ພິຈາລະນາ, ຮັບຮອງ ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ກະຊວງ, ອົງການ, ແຂວງ, ນະຄອນ, ພິຈາລະນາ, ຮັບຮອງ ເຂດແດນຂອງແຂວງ, ນະຄອນ ຕາມການສະເໜີຂອງນາຍົກລັດຖະມົນຕີ;
17. ພິຈາລະນາ, ຮັບຮອງ ການໃຫ້ນິລະໂທດກຳ;
18. ພິຈາລະນາ, ຮັບຮອງ ການຍົກເລີກ, ລົບລ້າງ ການເຂົ້າຮ່ວມສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນໃນລະດັບລັດ;
19. ພິຈາລະນາ, ຮັບຮອງ ບັນຫາຄວາມໝັ້ນຄົງ, ຄວາມປອດໄພ ແລະ ສັນຕິພາບ;
20. ຕິດຕາມກວດກາ ການປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ໂຄງການລະດັບຊາດ ແລະ ໂຄງການທີ່ມີຜົນກະທົບ ຕໍ່ ປະຊາຊົນຈຳນວນຫລວງຫລາຍ ຫລື ຕໍ່ສິ່ງແວດລ້ອມ ຢ່າງຮ້າຍແຮງ;
21. ຍົກເລີກນິຕິກຳ ຂອງຄະນະປະຈຳສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ, ນາຍົກລັດຖະມົນຕີ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ທີ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍ, ຍົກເວັ້ນຄຳຕັດສິນ ... ຄຳຕົກລົງກ່ຽວກັບການດຳເນີນຄະດີຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ;
22. ພົວພັນ, ຮ່ວມມືກັບລັດຖະສະພາ, ອົງການຈັດຕັ້ງຕ່າງປະເທດ, ພາກພື້ນ ແລະ ສາກົນ;
23. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 4(ປັບປຸງ). **ຫລັກການເຄື່ອນໄຫວຂອງສະພາແຫ່ງຊາດ**

**ສະພາແຫ່ງຊາດ ຈັດຕັ້ງ ແລະ ເຄື່ອນໄຫວ ບົນພື້ນຖານຫລັກການ ດັ່ງນີ້:**

- ລວມສູນປະຊາທິປະໄຕ;
- ນິຕິທຳ;
- ປະຕິບັດໜ້າທີ່ວຽກງານຕາມລະບອບປະຊຸມ;
- ຕົກລົງບັນຫາ ຕາມສຽງສ່ວນຫລາຍ;
- ຕິດແທດຕົວຈິງກັບປະຊາຊົນ ແລະ ຮາກຖານ;
- ປະສານສົມທົບຢ່າງກົມກຽວກັບຂະແໜງການ ທີ່ກ່ຽວຂ້ອງ.

**ມາດຕາ 5. ອາຍຸການຂອງສະພາແຫ່ງຊາດ**

ສະພາແຫ່ງຊາດແຕ່ລະຊຸດ ມີອາຍຸການຫ້າປີ ຊຶ່ງເລີ່ມແຕ່ກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດຊຸດນັ້ນ ໄປເຖິງກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດຊຸດໃໝ່.

ການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ ຕ້ອງໃຫ້ແລ້ວຢ່າງຊ້າ ຫົກສິບວັນກ່ອນ ສະພາແຫ່ງຊາດຊຸດເກົ່າຈະໝົດອາຍຸການ.

ໃນກໍລະນີທີ່ມີຄວາມຫຍຸ້ງຍາກໃຫ້ແກ່ການເລືອກຕັ້ງ ຍ້ອນສາເຫດໃດໜຶ່ງນັ້ນ ສະພາແຫ່ງຊາດຈະຕໍ່ອາຍຸການຂອງຕົນກໍໄດ້ ແຕ່ຕ້ອງດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ ຢ່າງຊ້າບໍ່ໃຫ້ເກີນຫົກເດືອນ ພາຍຫລັງສະພາບການໄດ້ກັບຄືນສູ່ຄວາມເປັນປົກກະຕິ.

ໃນກໍລະນີທີ່ມີຄວາມຈຳເປັນ ສະພາແຫ່ງຊາດຈະດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ກ່ອນການໝົດອາຍຸການຂອງຕົນກໍໄດ້ ແຕ່ຕ້ອງໄດ້ຮັບຄວາມເຫັນດີຢ່າງໜ້ອຍ ສອງ ສ່ວນສາມຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 6(ປັບປຸງ). ງົບປະມານຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ມີງົບປະມານສະເພາະ ຊຶ່ງນອນຢູ່ໃນງົບປະມານແຫ່ງລັດ ເພື່ອຮັບໃຊ້ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນ.

ງົບປະມານ ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ຂຶ້ນກັບງົບປະມານຂອງສະພາແຫ່ງຊາດ.

ຄະນະປະຈຳສະພາແຫ່ງຊາດ ອອກລະບຽບການສະເພາະ ກ່ຽວກັບການຂຶ້ນແຜນ, ຄຸ້ມຄອງ, ກວດກາ ການນຳໃຊ້ງົບປະມານຂອງສະພາແຫ່ງຊາດ.

## ໝວດທີ II
## ກອງປະຊຸມສະພາແຫ່ງຊາດ

**ມາດຕາ 7. ປະເພດກອງປະຊຸມສະພາແຫ່ງຊາດ**

**ສະພາແຫ່ງຊາດ ມີກອງປະຊຸມ ສາມ ປະເພດ ດັ່ງນີ້ :**

1. ກອງປະຊຸມຄັ້ງປະຖົມມະລືກ;
2. ກອງປະຊຸມສະໄໝສາມັນ;
3. ກອງປະຊຸມສະໄໝວິສາມັນ.

**ມາດຕາ 8(ປັບປຸງ). ກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດ**

ກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດ ເປີດຂຶ້ນຢ່າງຊ້າ ຫົກສິບວັນ ຫລັງຈາກການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ ຊຶ່ງແມ່ນປະທານສະພາແຫ່ງຊາດຊຸດເກົ່າ ເປັນປະ

ທານ ແລະ ຊີ້ນຳກອງປະຊຸມ ຈົນກວ່າໄດ້ເລືອກຕັ້ງປະທານສະພາແຫ່ງຊາດຊຸດໃໝ່.

**ກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຮັບຟັງການລາຍງານຂອງຄະນະກຳມະການເລືອກຕັ້ງລະດັບຊາດ ກ່ຽວກັບຜົນຂອງການເລືອກຕັ້ງ ແລະ ການຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາແຫ່ງຊາດ;
2. ພິຈາລະນາ, ຮັບຮອງ ການເລືອກຕັ້ງ ປະທານ, ຮອງປະທານ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດຊຸດເກົ່າ;
3. ພິຈາລະນາ, ຮັບຮອງ ການສ້າງຕັ້ງ ຫລື ຍຸບເລີກ ໂຄງປະກອບກົງຈັກຂອງສະພາແຫ່ງຊາດ;
4. ພິຈາລະນາ, ຮັບຮອງ ການແຕ່ງຕັ້ງ ບັນດາປະທານ ແລະ ຮອງປະທານ ກຳມາທິການ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;
5. ພິຈາລະນາ, ຮັບຮອງ ການສ້າງຕັ້ງຄະນະລັດຖະສະພາສາກົນຂອງສະພາແຫ່ງຊາດ, ການເລືອກຕັ້ງປະທານ, ຮອງປະທານ ແລະ ເລຂາທິການຄະນະລັດຖະສະພາສາກົນ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;
6. ພິຈາລະນາ, ຮັບຮອງ ການເລືອກຕັ້ງປະທານປະເທດ ແລະ ຮອງປະທານປະເທດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;
7. ພິຈາລະນາ, ຮັບຮອງ ການແຕ່ງຕັ້ງນາຍົກລັດຖະມົນຕີ ຕາມການສະເໜີ ຂອງປະທານປະເທດ;
8. ພິຈາລະນາ, ຮັບຮອງ ໂຄງປະກອບກົງຈັກຂອງລັດຖະບານ ແລະ ການແຕ່ງຕັ້ງບັນດາຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີ ຕາມການສະເໜີຂອງນາຍົກລັດຖະມົນຕີ;
9. ພິຈາລະນາ, ຮັບຮອງ ການເລືອກຕັ້ງປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕາມການສະເໜີ ຂອງປະທານປະເທດ;
10. ພິຈາລະນາ,ຮັບຮອງ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ;
11. ພິຈາລະນາ, ຮັບຮອງ ແຜນການ 5 ປີ ກ່ຽວກັບການສ້າງ, ປັບປຸງກົດໝາຍ ແລະ ແຜນດຳເນີນງານຂອງສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;
12. ພິຈາລະນາ, ຮັບຮອງ ບັນຫາ, ວຽກງານອື່ນ ທີ່ສຳຄັນ.

**ມາດຕາ 9(ປັບປຸງ). ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ເປີດກອງປະຊຸມສະໄໝສາມັນປີລະສອງເທື່ອ, ເທື່ອທີໜຶ່ງເປີດຂຶ້ນໃນທ້າຍປີງົບປະມານ ລະຫວ່າງເດືອນ ມິຖຸນາ ຫາ ເດືອນ ກໍລະກົດ ແລະ ເທື່ອທີສອງ ໃນຕົ້ນປີງົບປະມານ ລະຫວ່າງເດືອນ ພະຈິກ ຫາ ເດືອນ ທັນວາ ໂດຍແມ່ນຄະນະປະຈຳສະພາແຫ່ງຊາດເປັນຜູ້ຮຽກໂຮມ.

9.1. ກອງປະຊຸມສະໄໝສາມັນປະຈຳປີເທື່ອທີໜຶ່ງຂອງສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຮອງ ບົດລາຍງານປະຈຳປີຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ທິດທາງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດປະຈຳສົກປີຕໍ່ໄປ;
2. ພິຈາລະນາ, ຮັບຮອງ ບົດລາຍງານການເຄື່ອນໄຫວປະຈຳປີ ແລະ ແຜນການວຽກງານປະຈຳສົກປີຕໍ່ໄປຂອງສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ;
3. ພິຈາລະນາ, ຮັບຮອງ ບົດລາຍງານການເຄື່ອນໄຫວ, ທິດທາງແຜນການເຄື່ອນໄຫວ ໃນຕໍ່ໜ້າ ຂອງອົງການກວດສອບແຫ່ງລັດ ແລະ ບົດລາຍງານຜົນການກວດສອບ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ ຂອງລັດ;
4. ເລືອກຕັ້ງ, ປົດຕຳແໜ່ງ ປະທານອົງການກວດສອບແຫ່ງລັດ ຕາມການສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບ;
5. ຊັກຖາມ ຄະນະປະຈຳສະພາແຫ່ງຊາດ, ປະທານປະເທດ, ນາຍົກລັດຖະມົນຕີ, ລັດຖະມົນຕີ, ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ;
6. ພິຈາລະນາ, ຮັບຮອງ ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການປະຈຳປີ ແລະ ແຜນການປະຈຳສົກປີຕໍ່ໄປຂອງສະພາແຫ່ງຊາດ;
7. ພິຈາລະນາ, ຮັບຮອງ ການສ້າງ ແລະ ປັບປຸງກົດໝາຍ;
8. ພິຈາລະນາ, ຮັບຮອງ ບັນຫາ, ວຽກງານອື່ນທີ່ສຳຄັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງກົດໝາຍສະບັບນີ້ ຊຶ່ງເຫັນວ່າມີຄວາມຈຳເປັນ.

**9.2. ກອງປະຊຸມສະໄໝສາມັນປະຈຳປີເທື່ອທີສອງຂອງສະພາແຫ່ງຊາດ ມີສິດ ແລະ ໜ້າທີ່ ດັ່ງນີ້:**

1. ພິຈາລະນາ, ຮັບຮອງ ການສ້າງ ແລະ ປັບປຸງກົດໝາຍ;
2. ພິຈາລະນາ, ຮັບຮອງ ບົດສະຫລຸບຂາດຕົວ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳສົກປີຜ່ານມາ;
3. ພິຈາລະນາ, ຮັບຮອງ ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ທົກເດືອນຕົ້ນປີ, ການດັດແກ້ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຫົກເດືອນທ້າຍປີ ຫລື ບົດລາຍງານກ່ຽວກັບບັນຫາໃດໜຶ່ງຂອງລັດຖະບານ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;
4. ພິຈາລະນາ, ຮັບຮອງບົດລາຍງານຜົນການກວດສອບກ່ຽວກັບການສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ ຂອງລັດ ຂອງອົງການກວດສອບແຫ່ງລັດ;

5. ພິຈາລະນາ, ຮັບຮອງ ບົດລາຍງານຂອງປະທານສານປະຊາຊົນສູງສຸດ ແລະ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໃດໜຶ່ງ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;
6. ຊັກຖາມ ນາຍົກລັດຖະມົນຕີ, ລັດຖະມົນຕີ, ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ;
7. ພິຈາລະນາ, ຮັບຮອງ ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວຂອງຄະນະປະຈຳສະພາແຫ່ງຊາດ ໃນລະຫວ່າງສອງກອງປະຊຸມ;
8. ພິຈາລະນາ, ຮັບຮອງ ບັນຫາ, ວຽກງານອື່ນທີ່ສຳຄັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງກົດໝາຍສະບັບນີ້ ຊຶ່ງເຫັນວ່າມີຄວາມຈຳເປັນ.

### ມາດຕາ 10. ກອງປະຊຸມສະໄໝວິສາມັນຂອງສະພາແຫ່ງຊາດ

ກອງປະຊຸມສະໄໝວິສາມັນຂອງສະພາແຫ່ງຊາດ ແມ່ນ ກອງປະຊຸມສະພາແຫ່ງຊາດ ທີ່ເປີດຂຶ້ນໃນລະຫວ່າງ ສອງກອງປະຊຸມສະໄໝສາມັນ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ຫລື ຕາມການສະເໜີຂອງປະທານປະເທດ, ນາຍົກລັດຖະມົນຕີ ຫລື ສະມາຊິກສະພາແຫ່ງຊາດ ຢ່າງໜ້ອຍໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກທັງໝົດ ເພື່ອພິຈາລະນາ, ຕົກລົງບັນຫາທີ່ສຳຄັນ ແລະ ຮີບດ່ວນ.

### ມາດຕາ 11. ຫລັກການດຳເນີນກອງປະຊຸມສະພາແຫ່ງຊາດ

ກອງປະຊຸມສະພາແຫ່ງຊາດ ຈະດຳເນີນໄດ້ກໍຕໍ່ເມື່ອຫາກມີສະມາຊິກສະພາແຫ່ງຊາດ ເຂົ້າຮ່ວມຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດທັງໝົດ.

ກອງປະຊຸມສະພາແຫ່ງຊາດ ດຳເນີນຢ່າງເປີດເຜີຍ ພາຍໃຕ້ການຄວບຄຸມ ແລະ ຊີ້ນຳຂອງປະທານ ຫລື ຮອງປະທານ ຜູ້ໄດ້ຮັບມອບໝາຍ ຈາກປະທານສະພາແຫ່ງຊາດ.

ກອງປະຊຸມສະພາແຫ່ງຊາດ ແຕ່ງຕັ້ງກອງເລຂານຸການ ເປັນຜູ້ຊ່ວຍວຽກ.

### ມາດຕາ 12. ການຮຽກໂຮມກອງປະຊຸມສະພາແຫ່ງຊາດ

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຮຽກໂຮມກອງປະຊຸມສະພາແຫ່ງຊາດ.

ເອກະສານ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະພາແຫ່ງຊາດ ຕ້ອງສົ່ງໃຫ້ສະມາຊິກສະພາແຫ່ງຊາດ ຢ່າງຊ້າ ສາມວັນ ກ່ອນວັນເປີດກອງປະຊຸມ.

### ມາດຕາ 13(ປັບປຸງ). ຜູ້ເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດ

ຜູ້ເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດ ມີ ສະມາຊິກສະພາແຫ່ງຊາດທັງໝົດ; ນອກຈາກນີ້ ຍັງມີປະທານປະເທດ, ນາຍົກລັດຖະມົນຕີ, ຄະນະລັດຖະບານ, ປະທານສານປະຊາຊົນສູງສຸດ, ຫົວ

ໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານອົງການກວດສອບແຫ່ງລັດ, ຜູ້ຕາງໜ້າອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຕົວແທນຊັ້ນຄົນຕ່າງໆ, ທູຕານຸທູດ ແລະຕົວແທນອົງການຈັດຕັ້ງສາກົນ ຢູ່ ສປປ ລາວ. ສຳລັບຜູ້ເຂົ້າຮ່ວມທີ່ບໍ່ແມ່ນສະມາຊິກສະພາແຫ່ງຊາດນັ້ນ ອາດຈະໄດ້ຮັບອະນຸຍາດຈາກປະທານກອງປະຊຸມ ໃຫ້ປະກອບຄວາມຄິດຄວາມເຫັນໃນກອງປະຊຸມ ແຕ່ຫາກບໍ່ມີສິດລົງຄະແນນສຽງ.

ສະມາຊິກສະພາແຫ່ງຊາດ ແລະ ຜູ້ເຂົ້າຮ່ວມອື່ນທີ່ກ່ຽວຂ້ອງ ຕ້ອງປະຕິບັດຕາມລະບຽບການ ແລະ ວາລະຂອງກອງປະຊຸມທີ່ໄດ້ວາງອອກ.

### ມາດຕາ 14(ປັບປຸງ). ມະຕິຂອງກອງປະຊຸມສະພາແຫ່ງຊາດ

ມະຕິຂອງກອງປະຊຸມສະພາແຫ່ງຊາດ ເປັນນິຕິກຳປະເພດໜຶ່ງ ທີ່ມີຜົນບັງຄັບໃຊ້ທົ່ວສັງຄົມ ຊຶ່ງສັງລວມບັນຫາສຳຄັນຕ່າງໆ ທີ່ກອງປະຊຸມໄດ້ຕົກລົງຮັບຮອງເອົາ.

ມະຕິຂອງກອງປະຊຸມສະພາແຫ່ງຊາດ ຖືກຮັບຮອງເອົາດ້ວຍການລົງຄະແນນສຽງຢ່າງເປີດເຜີຍ ຫລື ປິດລັບ ຕາມການຕົກລົງຂອງກອງປະຊຸມ.

ມະຕິຂອງກອງປະຊຸມສະພາແຫ່ງຊາດ ຈະມີຄຸນຄ່າໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກທີ່ເຂົ້າຮ່ວມກອງປະຊຸມ ເວັ້ນເສຍແຕ່ໃນກໍລະນີການເລືອກຕັ້ງປະທານປະເທດ, ການເລືອກຕັ້ງສະມາຊິກສະພາແຫ່ງຊາດກ່ອນການໝົດອາຍຸການ ຂອງສະພາແຫ່ງຊາດ ແລະ ການປັບປຸງລັດຖະທຳມະນູນ ຊຶ່ງຕ້ອງໄດ້ຮັບຄະແນນສຽງຢ່າງໜ້ອຍສອງສ່ວນສາມ ຂອງຈຳນວນສະມາຊິກສະພາແຫ່ງຊາດທີ່ເຂົ້າຮ່ວມກອງປະຊຸມ.

### ມາດຕາ 15. ບົດບັນທຶກຂອງກອງປະຊຸມສະພາແຫ່ງຊາດ

ກອງປະຊຸມສະພາແຫ່ງຊາດແຕ່ລະເທື່ອ ຕ້ອງເຮັດບົດບັນທຶກ ໂດຍມີການເຊັນຢັ້ງຢືນຂອງຫົວໜ້າກອງເລຂານຸການ ແລະ ປະທານກອງປະຊຸມສະພາແຫ່ງຊາດ.

## ໝວດທີ III
## ໂຄງປະກອບຂອງສະພາແຫ່ງຊາດ

### ມາດຕາ 16(ປັບປຸງ). ໂຄງປະກອບຂອງສະພາແຫ່ງຊາດ

ສະພາແຫ່ງຊາດ ມີ ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ດັ່ງນີ້:

- ສະມາຊິກສະພາແຫ່ງຊາດ;
- ຄະນະປະຈຳສະພາແຫ່ງຊາດ;
- ປະທານ ແລະ ຮອງປະທານສະພາແຫ່ງຊາດ;
- ກຳມາທິການຂອງສະພາແຫ່ງຊາດ;

- ຫ້ອງວ່າການສະພາແຫ່ງຊາດ;
- ຄະນະສະມາຊິກສະພາແຫ່ງຊາດເພດຍິງ;
- ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ.

**ມາດຕາ 17(ປັບປຸງ). ອາຍຸການ**

ໂຄງປະກອບຂອງສະພາແຫ່ງຊາດ ມີອາຍຸການເທົ່າກັບອາຍຸການ ຂອງສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງກົດໝາຍສະບັບນີ້.

## ໝວດທີ IV
## ສະມາຊິກສະພາແຫ່ງຊາດ

**ມາດຕາ 18. ສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ເປັນຕົວແທນແຫ່ງມານະຈິດ, ສິດ, ຜົນປະໂຫຍດ ແລະ ຄວາມມຸ່ງມາດປາດຖະໜາຂອງປະຊາຊົນບັນດາເຜົ່າ ຊຶ່ງແມ່ນພົນລະເມືອງລາວເປັນຜູ້ເລືອກຕັ້ງ ແລະ ຢູ່ ໃຕ້ການກວດກາຂອງປະຊາຊົນ, ປະຕິບັດ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 20 ຂອງກົດໝາຍສະບັບນີ້.

**ມາດຕາ 19. ອາຍຸການຂອງສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ.

ໃນກໍລະນີທີ່ມີການເລືອກຕັ້ງສະມາຊິກສະພາແຫ່ງຊາດແທນນັ້ນ ອາຍຸການຂອງສະມາຊິກສະພາແຫ່ງຊາດທີ່ໄດ້ຮັບເລືອກຕັ້ງແທນ ຈະເລີ່ມແຕ່ກອງປະຊຸມສະພາແຫ່ງຊາດທີ່ຖັດຈາກການເລືອກຕັ້ງແທນນັ້ນ ໄປເຖິງວັນເປີດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດໃໝ່.

**ມາດຕາ 20(ປັບປຸງ). ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ**

**ສະມາຊິກສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ເປັນແບບຢ່າງໃນການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍຂອງລັດ, ມະຕິຂອງກອງປະຊຸມສະພາແຫ່ງຊາດ ແລະມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ, ເຄົາລົບສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ;
2. ໂຄສະນາ, ເຜີຍແຜ່, ປຸກລະດົມ ປະຊາຊົນບັນດາເຜົ່າ ແລະ ຊັ້ນຄົນ ໃຫ້ເຊື່ອມຊຶມ ແລະ ເຂົ້າຮ່ວມໃນການປະຕິບັດແນວທາງ, ນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງ

ຊາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ, ໃຫ້ຮູ້ ແລະ ເຂົ້າໃຈສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ, ເຂົ້າຮ່ວມໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ;

3. ລາຍງານການເຄື່ອນໄຫວວຽກງານຕໍ່ປະຊາຊົນ ໃນເຂດເລືອກຕັ້ງຂອງຕົນຢ່າງໜ້ອຍ ປີລະສອງເທື່ອ ແລະ ດຳເນີນຊີວິດການເມືອງ ໃນຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງຂອງຕົນ ຢ່າງເປັນປົກກະຕິ;
4. ເຂົ້າຮ່ວມແຕ່ຫົວທີກັບອົງການປົກຄອງທ້ອງຖິ່ນ ເປັນຕົ້ນ ຫ້ອງວ່າການ ແລະ ພະແນກການອ້ອມຂ້າງແຂວງ, ນະຄອນ ໃນການຄົ້ນຄວ້າ, ປະກອບຄຳເຫັນໃສ່ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງທ້ອງຖິ່ນ ແລະ ບັນຫາສຳຄັນອື່ນໃນເຂດເລືອກຕັ້ງຂອງຕົນ;
5. ເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດ ຢ່າງເປັນປົກກະຕິ, ຄົ້ນຄວ້າ, ກະກຽມເນື້ອໃນການປະກອບຄຳເຫັນໃນກອງປະຊຸມ ແລະ ລົງຄະແນນສຽງ ດ້ວຍຄວາມຮັບຜິດຊອບສູງ.

   ໃນກໍລະນີທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ ຍ້ອນສາເຫດຈຳເປັນໃດໜຶ່ງ ສະມາຊິກສະພາແຫ່ງຊາດ ຕ້ອງໄດ້ຮັບອະນຸຍາດຢ່າງເປັນລາຍລັກອັກສອນ ຈາກປະທານຄະນະປະຈຳສະພາແຫ່ງຊາດ;
6. ຊັກຖາມ ປະທານປະເທດ, ປະທານສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ນາຍົກລັດຖະມົນຕີ, ຄະນະລັດຖະບານ, ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານອົງການກວດສອບແຫ່ງລັດ ໃນກອງປະຊຸມສະພາແຫ່ງຊາດ; ຊັກຖາມເຈົ້າແຂວງ, ເຈົ້າຄອງນະຄອນ ແລະ ຫົວໜ້າພະແນກການຕ່າງໆຂອງແຂວງ, ນະຄອນ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ;
7. ໃຫ້ຄຳແນະນຳແກ່ພົນລະເມືອງ ກ່ຽວກັບການຍື່ນຄຳຮ້ອງທຸກ; ປະກອບຄຳຄິດຄຳເຫັນໃຫ້ແກ່ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ກ່ຽວກັບການພິຈາລະນາຄຳຮ້ອງຂໍຄວາມເປັນທຳ ເພື່ອໃຫ້ຄະນະດັ່ງກ່າວ ພິຈາລະນາຕາມພາລະບົດບາດຂອງຕົນ;
8. ພົບປະ, ໃກ້ຊິດຕິດແທດກັບປະຊາຊົນ, ຊອກຮູ້ ແລະ ນຳເອົາຄວາມຄິດຄວາມເຫັນ, ຄວາມມຸ່ງມາດປາດຖະໜາ ແລະ ຄຳສະເໜີຂອງປະຊາຊົນ ເພື່ອສະເໜີຕໍ່ສະພາແຫ່ງຊາດ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ພິຈາລະນາ, ແກ້ໄຂ;
9. ເຂົ້າຮ່ວມກອງປະຊຸມ, ການເຄື່ອນໄຫວ ແລະ ພິທີທີ່ສຳຄັນຕ່າງໆ ຂອງອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມຕ່າງໆ ໃນເຂດເລືອກຕັ້ງຂອງຕົນ ໂດຍໜ້າທີ່ ແລະ ຕາມການເຊີນ;
10. ໄດ້ຮັບຂໍ້ມູນ, ຂ່າວສານຕ່າງໆ ທີ່ຈຳເປັນໃນການປະຕິບັດໜ້າທີ່ຂອງຕົນ;

11. ສະຫລຸບ, ລາຍງານການເຄື່ອນໄຫວວຽກງານຂອງຕົນໃນແຕ່ລະໄລຍະ ຢ່າງເປັນລາຍລັກອັກສອນ ໃຫ້ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ກຳມາທິການທີ່ຕົນສັງກັດ ຊາບ;
12. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບພາຍໃນຂອງສະພາແຫ່ງຊາດ.

**ມາດຕາ 21(ປັບປຸງ). ການສັງກັດ ແລະ ການຄວບຕຳແໜ່ງຂອງສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດແຕ່ລະທ່ານ ຕ້ອງສັງກັດຢູ່ໃນໜຶ່ງ ຫລື ສອງກຳມາທິການ ແລະ ການຈັດຕັ້ງອື່ນ ຂອງສະພາແຫ່ງຊາດ, ເປັນສະມາຊິກສະພາແຫ່ງຊາດປະຈຳການ ຫລື ຄວບຕຳແໜ່ງຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ແລະ ຕາມກົດໝາຍ.

ສະມາຊິກສະພາແຫ່ງຊາດ ຕ້ອງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດຢ່າງຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ ຂອງຄະນະປະຈຳສະພາແຫ່ງຊາດ, ກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ການຈັດຕັ້ງອື່ນຂອງສະພາແຫ່ງຊາດ ທີ່ຕົນສັງກັດ.

**ມາດຕາ 22. ການສິ້ນສຸດການເປັນສະມາຊິກສະພາແຫ່ງຊາດ**

**ການເປັນສະມາຊິກສະພາແຫ່ງຊາດ ຈະສິ້ນສຸດລົງໃນກໍລະນີ ດັ່ງນີ້ :**

1. ໝົດອາຍຸການຂອງສະມາຊິກສະພາແຫ່ງຊາດ;
2. ລາອອກ ດ້ວຍເຫດຜົນຈຳເປັນ;
3. ຖືກປົດອອກຈາກການເປັນສະມາຊິກສະພາແຫ່ງຊາດ;
4. ເສຍຊີວິດ.

**ມາດຕາ 23. ນະໂຍບາຍຕໍ່ສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ໄດ້ຮັບນະໂຍບາຍສະເພາະ ເຊັ່ນ ເງິນອຸດໜູນ, ການຍ້ອງຍໍ ແລະ ນະໂຍບາຍອື່ນ ຊຶ່ງກຳນົດໄວ້ໃນລະບຽບການຕ່າງຫາກ ເພື່ອຮັບປະກັນການເຄື່ອນໄຫວວຽກງານຂອງຕົນ.

**ມາດຕາ 24. ອະພິສິດຂອງສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ຈະບໍ່ຖືກຈັບຕົວ, ກັກຂັງ ຫລື ດຳເນີນຄະດີອາຍາ ຖ້າຫາກບໍ່ໄດ້ຮັບຄວາມເຫັນດີຈາກຄະນະປະຈຳສະພາແຫ່ງຊາດ.

ຖ້າຫາກວ່າມີຄວາມຈຳເປັນ ຕ້ອງໄດ້ຈັບຕົວສະມາຊິກສະພາແຫ່ງຊາດ ໃນກໍລະນີທີ່ມີການກະທຳຜິດເຊິ່ງໜ້າ ຫລື ກໍລະນີທີ່ຮີບດ່ວນນັ້ນ ອົງການທີ່ໄດ້ກັກຂັງສະມາຊິກສະພາແຫ່ງຊາດ ຕ້ອງ

ລາຍງານທັນທີໃຫ້ຄະນະປະຈຳສະພາແຫ່ງຊາດ ເພື່ອຂໍຄວາມເຫັນກ່ຽວກັບການດຳເນີນຄະດີໃນຂັ້ນຕໍ່ໄປ.

ໃນໄລຍະການສືບສວນ-ສອບສວນນັ້ນ ສະມາຊິກສະພາແຫ່ງຊາດ ຜູ້ຖືກດຳເນີນຄະດີ ຍັງມີສິດເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດໄດ້.

## ໝວດທີ V
## ຄະນະປະຈຳສະພາແຫ່ງຊາດ

**ມາດຕາ 25(ປັບປຸງ). ທີ່ຕັ້ງ ແລະ ພາລະບົດບາດຂອງຄະນະປະຈຳສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ແມ່ນ ອົງການປະຈຳການຂອງສະພາແຫ່ງຊາດ, ມີພາລະບົດບາດປະຕິບັດສິດ ແລະ ໜ້າທີ່ແທນສະພາແຫ່ງຊາດ ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 26(ປັບປຸງ). ສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ**

**ຄະນະປະຈຳສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຄົ້ນຄວ້າ ແລະ ສ້າງແຜນຍຸດທະສາດກ່ຽວກັບການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ໃຫ້ມີຄຸນນະພາບ;
2. ຊີ້ນຳການສ້າງແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ຂອງຕົນໃນແຕ່ລະໄລຍະ;
3. ຄົ້ນຄວ້າການສ້າງ ແລະ ປັບປຸງກົດໝາຍ ເພື່ອນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ ແລະ ຮັບຮອງເອົາ; ຄົ້ນຄວ້າ, ພິຈາລະນາ ແລະ ສ້າງລັດຖະບັນຍັດ ແລ້ວສະເໜີຕໍ່ປະທານປະເທດ ຕົກລົງ;
4. ກະກຽມກອງປະຊຸມສະພາແຫ່ງຊາດ ເພື່ອຮັບປະກັນໃຫ້ມີຄຸນນະພາບ, ປະສິດທິພາບ ແລະ ທັນເວລາ;
5. ຕີຄວາມໝາຍລັດຖະທຳມະນູນ ແລະ ກົດໝາຍ;
6. ອອກຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳອື່ນ ທີ່ ຕົນຮັບຜິດຊອບ;
7. ອອກມະຕິຕົກລົງ, ຄຳແນະນຳ, ຄຳສັ່ງ ແລະ ແຈ້ງການກ່ຽວກັບວຽກງານຕ່າງໆ;
8. ຊີ້ນຳ ການໂຄສະນາ, ເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳອື່ນຕາມຄວາມຮັບຜິດຊອບຂອງຕົນ ຫລື ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ;

9. ແນະນຳອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດໝາຍທີ່ປະກາດໃຊ້ ລວມທັງປະເມີນຜົນຂອງການຈັດຕັ້ງປະຕິບັດກົດໝາຍນັ້ນ;
10. ຄົ້ນຄວ້າ ໂຄງປະກອບ, ສິດ ແລະ ໜ້າທີ່ຂອງການຈັດຕັ້ງຂອງສະພາແຫ່ງຊາດ;
11. ພິຈາລະນາ ການແຕ່ງຕັ້ງສະມາຊິກສະພາແຫ່ງຊາດ ໄປຮັບຜິດຊອບວຽກງານອື່ນ ຕາມການສະເໜີຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;
12. ພິຈາລະນາ, ຮັບຮອງ ການສະເໜີຂອງນາຍົກລັດຖະມົນຕີ ກ່ຽວກັບການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ສະມາຊິກຄະນະລັດຖະບານ, ຫົວໜ້າອົງການ ໃນກໍລະນີທີ່ຈຳເປັນ ແລ້ວລາຍງານ ໃຫ້ກອງປະຊຸມສະພາແຫ່ງຊາດຖັດໄປນັ້ນ ພິຈາລະນາ, ຮັບຮອງເອົາ;
13. ຄົ້ນຄວ້າ ແລະ ສະເໜີຕໍ່ປະທານປະເທດ ເພື່ອພິຈາລະນາຕົກລົງກ່ຽວກັບການໃຫ້ອະໄພຍະໂທດ ແກ່ນັກໂທດ ຜູ້ທີ່ປະພຶດດີ ແລະມີຄວາມກ້າວໜ້າໃນການປະຕິບັດໂທດ;
14. ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ໂຄງການຂອງລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການປົກຄອງແຂວງ, ນະຄອນ ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ;
15. ຄົ້ນຄວ້າບົດສະຫລຸບຊາດຕົວການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ ເພື່ອນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາ;
16. ໂຈະການຈັດຕັ້ງປະຕິບັດນິຕິກຳຂອງລັດຖະບານ, ນາຍົກລັດຖະມົນຕີ, ລັດຖະມົນຕີ, ປະທານອົງການກວດສອບແຫ່ງລັດ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ເຈົ້າແຂວງ, ເຈົ້າຄອງນະຄອນ, ປະທານສານປະຊາຊົນສູງສຸດ ແລະ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ທີ່ຂັດກັບລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ ແລ້ວນຳສະເໜີ ຕໍ່ ກອງປະຊຸມສະພາແຫ່ງຊາດຖັດໄປນັ້ນ ພິຈາລະນາ, ຍົກເວັ້ນ ຄຳຕົກລົງກ່ຽວກັບການດຳເນີນຄະດີຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ;
17. ຕົກລົງກ່ຽວກັບການໃຫ້, ການປະສັນຊາດລາວ; ການໃຫ້ສັດຕະຍາບັນສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນໃນລະດັບລັດ ຕາມການສະເໜີຂອງນາຍົກລັດຖະມົນຕີ;
18. ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງຫົວໜ້າ, ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ຫົວໜ້າ, ຮອງຫົວໜ້າຄະນະສະມາຊິກສະພາແຫ່ງຊາດເພດຍິງ, ຫົວໜ້າກົມ ແລະ ການຈັດຕັ້ງອື່ນທີ່ຂຶ້ນກັບຫ້ອງວ່າການສະພາແຫ່ງຊາດ, ປະທານ, ຮອງປະທານຄະນະ

ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດປະຈຳເຂດເລືອກຕັ້ງ;

19. ບັນຈຸ, ສັບຊ້ອນ ສະມາຊິກສະພາແຫ່ງຊາດ ເຂົ້າເປັນກຳມະການຂອງແຕ່ລະກຳມາທິການ;
20. ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ບັນດາຜູ້ພິພາກສາຂອງສານປະຊາຊົນສູງສຸດ, ປະທານ, ຮອງປະທານ, ຜູ້ພິພາກສາຂອງສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ, ຫົວໜ້າອົງການກວດສອບປະຈຳພາກ;
21. ຊີ້ນຳ, ນຳພາ ການເຄື່ອນໄຫວວຽກງານ ແລະ ຮັບການລາຍງານສ່ອງແສງຂອງບັນດາກຳມາທິການ, ຫ້ອງວ່າການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດເພດຍິງ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ;
22. ຊີ້ນຳ ການຄົ້ນຄວ້າ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ;
23. ລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງຕົນໃນລະຫວ່າງສອງກອງປະຊຸມ;
24. ແຕ່ງຕັ້ງຄະນະກຳມະການສະເພາະກິດ ເພື່ອປະຕິບັດໜ້າທີ່ໃດໜຶ່ງ ໃນກໍລະນີທີ່ເຫັນວ່າມີຄວາມຈຳເປັນ;
25. ປະສານສົມທົບກັບອົງການຈັດຕັ້ງພັກ, ລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ;
26. ຊີ້ນຳ ພາກສ່ວນທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ໃນການກະກຽມ ແລະ ດຳເນີນກອງປະຊຸມຮ່ວມກັບລັດຖະບານ ແລະ ອົງການປົກປ້ອງກົດໝາຍ ຢ່າງໜ້ອຍປີລະເທື່ອ;
27. ພົວພັນ, ຮ່ວມມືກັບລັດຖະສະພາ ແລະ ອົງການຈັດຕັ້ງຕ່າງປະເທດ, ພາກພື້ນ ແລະ ສາກົນ;
28. ສະຫລຸບ, ຖອດຖອນບົດຮຽນ ກ່ຽວກັບການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ;
29. ກະກຽມການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດໃໝ່;
30. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 27. **ໂຄງປະກອບຂອງຄະນະປະຈຳສະພາແຫ່ງຊາດ**

**ຄະນະປະຈຳສະພາແຫ່ງຊາດ ປະກອບດ້ວຍ:**

- ປະທານ;
- ຮອງປະທານ;
- ກຳມະການ.

ປະທານ ແລະ ຮອງປະທານສະພາແຫ່ງຊາດເປັນທັງປະທານ ແລະ ຮອງປະທານຄະນະປະຈຳສະພາແຫ່ງຊາດ.

ຄະນະປະຈຳສະພາແຫ່ງຊາດ ສ້າງຕັ້ງຄະນະເລຂາທິການ ເພື່ອຮັບຜິດຊອບວຽກງານເນື້ອໃນຂອງສະພາແຫ່ງຊາດ. ໃນກໍລະນີທີ່ມີຄວາມຈຳເປັນ ຄະນະປະຈຳສະພາແຫ່ງຊາດ ຈະສ້າງຕັ້ງກົງຈັກຊ່ວຍວຽກອື່ນຂອງຕົນກໍໄດ້.

**ມາດຕາ 28. ການແບ່ງຄວາມຮັບຜິດຊອບພາຍໃນຄະນະປະຈຳສະພາແຫ່ງຊາດ**

ປະທານຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຮັບຜິດຊອບລວມ, ຊີ້ນຳ, ນຳພາວຽກງານຂອງຄະນະປະຈຳສະພາແຫ່ງຊາດ.

ປະທານຄະນະປະຈຳສະພາແຫ່ງຊາດ ຈະມອບໝາຍໃຫ້ຮອງປະທານ ຫລື ກຳມະການຄະນະປະຈຳທ່ານໃດທ່ານໜຶ່ງເຮັດໜ້າທີ່ແທນໃນເວລາປະທານຕິດຂັດ.

ຮອງປະທານຄະນະປະຈຳສະພາແຫ່ງຊາດ ມີໜ້າທີ່ຊ່ວຍປະທານ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ເປັນຜູ້ຊີ້ນຳວຽກງານຈຳນວນໜຶ່ງ ແລະ ຮັບຜິດຊອບວຽກງານອື່ນອີກ ຕາມການມອບໝາຍຂອງປະທານຄະນະປະຈຳສະພາແຫ່ງຊາດ.

ກຳມະການຂອງຄະນະປະຈຳສະພາແຫ່ງຊາດ ປະຕິບັດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍສະບັບນີ້ ແລະ ອາດຈະຖືກມອບໝາຍໃຫ້ຮັບຜິດຊອບວຽກງານໃດໜຶ່ງ ຕາມການຕົກລົງຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 29 (ໃໝ່). ຄະນະເລຂາທິການ**

ຄະນະເລຂາທິການ ແມ່ນ ການຈັດຕັ້ງໜຶ່ງທີ່ຂຶ້ນໂດຍກົງກັບ ຄະນະປະຈຳສະພາແຫ່ງຊາດ, ມີພາລະບົດບາດຄົ້ນຄວ້າ, ສັງລວມເນື້ອໃນວຽກງານຮອບດ້ານ ໃຫ້ແກ່ກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ທັງເປັນໂຄສົກຂອງສະພາແຫ່ງຊາດ.

ໂຄງປະກອບການຈັດຕັ້ງ, ບຸກຄະລາກອນ, ສິດ ແລະ ໜ້າທີ່ ຂອງຄະນະເລຂາທິການໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 30. ກອງປະຊຸມຂອງຄະນະປະຈຳສະພາແຫ່ງຊາດ**

ກອງປະຊຸມຂອງຄະນະປະຈຳສະພາແຫ່ງຊາດ ເປີດຂຶ້ນຢ່າງໜ້ອຍເດືອນລະເທື່ອ ໂດຍແມ່ນປະທານຄະນະປະຈຳສະພາແຫ່ງຊາດເປັນຜູ້ຮຽກໂຮມ.

ກອງປະຊຸມເປີດກວ້າງຂອງຄະນະປະຈຳສະພາແຫ່ງຊາດ ຈະເຊີນບຸກຄົນ ຫລື ການຈັດຕັ້ງໃດໜຶ່ງ ທີ່ກ່ຽວຂ້ອງເຂົ້າຮ່ວມນຳກໍໄດ້ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ. ບຸກຄົນ ຫລື ການຈັດຕັ້ງດັ່ງກ່າວ ມີສິດອອກຄຳເຫັນ ແຕ່ບໍ່ມີສິດລົງຄະແນນສຽງ.

ໃນກໍລະນີທີ່ປະທານຄະນະປະຈໍາສະພາແຫ່ງຊາດຕິດຂັດ ແມ່ນ ຮອງປະທານຜູ້ທີ່ຖືກມອບໝາຍ ຈາກປະທານນັ້ນ ເປັນຜູ້ຮຽກໂຮມ ແລະ ນໍາພາກອງປະຊຸມ.

ກອງປະຊຸມຂອງຄະນະປະຈໍາສະພາແຫ່ງຊາດ ຈະເປີດຂຶ້ນໄດ້ກໍຕໍ່ເມື່ອມີກໍາມະການຢ່າງໜ້ອຍສອງສ່ວນສາມເຂົ້າຮ່ວມ.

ຄະນະປະຈໍາສະພາແຫ່ງຊາດ ເປີດກອງປະຊຸມຮ່ວມກັບລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ ຢ່າງໜ້ອຍປີລະເທື່ອ.

### ມາດຕາ 31. ເນື້ອໃນກອງປະຊຸມຂອງຄະນະປະຈໍາສະພາແຫ່ງຊາດ

ເນື້ອໃນທີ່ຈະນໍາມາພິຈາລະນາ ຢູ່ກອງປະຊຸມຂອງຄະນະປະຈໍາສະພາແຫ່ງຊາດ ຕ້ອງເປັນບັນຫາສໍາຄັນ, ມີຈຸດສຸມ ພ້ອມກັນນັ້ນກໍຕ້ອງສົ່ງເອກະສານ ຫລື ແຈ້ງເນື້ອໃນຂອງກອງປະຊຸມ ໃຫ້ກໍາມະການຂອງຄະນະປະຈໍາສະພາແຫ່ງຊາດ ລວມທັງແຂກທີ່ຖືກເຊີນ ຊາບລ່ວງໜ້າຢ່າງຊ້າ ສາມວັນ ກ່ອນວັນເປີດກອງປະຊຸມ.

ກອງປະຊຸມຂອງຄະນະປະຈໍາສະພາແຫ່ງຊາດ ແຕ່ລະເທື່ອຕ້ອງມີບົດບັນທຶກ ໂດຍມີການເຊັນຂອງຜູ້ບັນທຶກ ແລະ ການເຊັນຢັ້ງຢືນຂອງປະທານກອງປະຊຸມ ພ້ອມທັງແຈ້ງຜົນຂອງກອງປະຊຸມ ໃຫ້ສະມາຊິກສະພາແຫ່ງຊາດຊາບ ແລະ ໃຫ້ສັງຄົມຮັບຮູ້ ໂດຍຜ່ານສື່ມວນຊົນ ຕາມແຕ່ລະກໍລະນີ.

### ມາດຕາ 32(ປັບປຸງ). ມະຕິຕົກລົງຂອງກອງປະຊຸມຄະນະປະຈໍາສະພາແຫ່ງຊາດ

ບັນຫາສໍາຄັນຕ່າງໆ ທີ່ນໍາມາພິຈາລະນາໃນກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ຕ້ອງມີມະຕິຕົກລົງ.

ມະຕິຕົກລົງຂອງກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈໍານວນກໍາມະການທີ່ເຂົ້າຮ່ວມກອງປະຊຸມ.

### ມາດຕາ 33. ຕາປະທັບຂອງຄະນະປະຈໍາສະພາແຫ່ງຊາດ

ຕາປະທັບຂອງຄະນະປະຈໍາສະພາແຫ່ງຊາດເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ " ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ", ເບື້ອງລຸ່ມຂຽນວ່າ " ຄະນະປະຈໍາສະພາແຫ່ງຊາດ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

# ໝວດທີ VI
## ປະທານ ແລະ ຮອງປະທານສະພາແຫ່ງຊາດ

**ມາດຕາ 34. ປະທານສະພາແຫ່ງຊາດ**

ປະທານສະພາແຫ່ງຊາດ ແມ່ນ ຫົວໜ້າສູງສຸດຂອງສະພາແຫ່ງຊາດ, ເປັນຜູ້ຊີ້ນຳ ແລະ ນຳພາວຽກງານຂອງສະພາແຫ່ງຊາດ ທັງເປັນຜູ້ຕາງໜ້າສະພາແຫ່ງຊາດ ໃນການພົວພັນວຽກງານພາຍໃນ ແລະ ຕ່າງປະເທດ.

**ມາດຕາ 35(ປັບປຸງ). ສິດ ແລະ ໜ້າທີ່ຂອງປະທານສະພາແຫ່ງຊາດ**

**ປະທານສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ເປັນປະທານຄະນະປະທານກອງປະຊຸມສະພາແຫ່ງຊາດ, ປະທານກອງປະຊຸມຄະນະປະຈຳສະພາແຫ່ງຊາດ;
2. ຊີ້ນຳ, ນຳພາ ແລະ ກວດກາການເຄື່ອນໄຫວວຽກງານຂອງຄະນະປະຈຳ, ກຳມາທິການ, ຫ້ອງວ່າການ, ຄະນະສະມາຊິກສະພາແຫ່ງຊາດເພດຍິງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ການຈັດຕັ້ງອື່ນຂອງສະພາແຫ່ງຊາດ;
3. ປຶກສາຫາລື, ປະສານສົມທົບວຽກງານສຳຄັນຂອງຊາດກັບປະທານປະເທດ, ນາຍົກລັດຖະມົນຕີ ແລະ ຫົວໜ້າອົງການຈັດຕັ້ງອື່ນ ທີ່ມີຄວາມຈຳເປັນ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 36(ປັບປຸງ). ຮອງປະທານສະພາແຫ່ງຊາດ**

ຮອງປະທານສະພາແຫ່ງຊາດ ມີໜ້າທີ່ຊ່ວຍປະທານສະພາແຫ່ງຊາດ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ຮັບຜິດຊອບວຽກງານຈຳນວນໜຶ່ງ, ເປັນຜູ້ວ່າການແທນ, ເປັນປະທານກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຕາມການມອບໝາຍ ຂອງປະທານສະພາແຫ່ງຊາດ.

ຮອງປະທານສະພາແຫ່ງຊາດ ເປັນຄະນະປະທານກອງປະຊຸມສະພາແຫ່ງຊາດ.

**ມາດຕາ 37. ຕາປະທັບຂອງປະທານສະພາແຫ່ງຊາດ**

ຕາປະທັບຂອງປະທານສະພາແຫ່ງຊາດ ເປັນຮູບວົງມົນ, ຢູ່ໃນກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ", ເບື້ອງລຸ່ມຂຽນວ່າ "ປະທານສະພາແຫ່ງຊາດ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

# ໝວດທີ VII
## ກຳມາທິການຂອງສະພາແຫ່ງຊາດ

**ມາດຕາ 38. ທີ່ຕັ້ງ ແລະ ພາລະບົດບາດຂອງກຳມາທິການສະພາແຫ່ງຊາດ**

ກຳມາທິການສະພາແຫ່ງຊາດ ແມ່ນ ກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ທີ່ປະກອບດ້ວຍ ບັນດາສະມາຊິກສະພາແຫ່ງຊາດ, ມີພາລະບົດບາດຊ່ວຍສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນການຈັດຕັ້ງປະຕິບັດວຽກງານ ຕາມຂອບເຂດ ສິດ ແລະ ໜ້າທີ່ລວມຂອງກຳມາທິການ ທີ່ໄດ້ກຳນົດໄວ້ ໃນກົດໝາຍສະບັບນີ້ ແລະ ລະບຽບການສະເພາະຂອງແຕ່ລະກຳມາທິການຂອງສະພາແຫ່ງຊາດ.

**ມາດຕາ 39. ບັນດາກຳມາທິການຂອງສະພາແຫ່ງຊາດ**

**ບັນດາກຳມາທິການຂອງສະພາແຫ່ງຊາດ ມີ ດັ່ງນີ້:**

1. ກຳມາທິການກົດໝາຍ;
2. ກຳມາທິການເສດຖະກິດ, ແຜນການ ແລະ ການເງິນ;
3. ກຳມາທິການວັດທະນະທຳ-ສັງຄົມ;
4. ກຳມາທິການບັນດາເຜົ່າ;
5. ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
6. ກຳມາທິການ ການຕ່າງປະເທດ.

ໃນກໍລະນີທີ່ຈຳເປັນ ຄະນະປະຈຳສະພາແຫ່ງຊາດຈະສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ເພື່ອສ້າງຕັ້ງກຳມາທິການອື່ນຕື່ມອີກກໍໄດ້.

**ມາດຕາ 40(ປັບປຸງ). ສິດ ແລະ ໜ້າທີ່ ລວມຂອງບັນດາກຳມາທິການ**

**ບັນດາກຳມາທິການ ມີ ສິດ ແລະ ໜ້າທີ່ລວມໃນການປະຕິບັດວຽກງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ດັ່ງນີ້:**

1. ສ້າງຮ່າງແຜນການເຄື່ອນໄຫວວຽກງານຂອງຕົນແຕ່ລະໄລຍະ;
2. ຄົ້ນຄວ້າ ແລະ ປະກອບຄວາມເຫັນໃສ່ຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງລັດຖະດຳລັດ, ຮ່າງດຳລັດ ແລະ ຮ່າງນິຕິກຳອື່ນ ທີ່ຂະແໜງການກ່ຽວຂ້ອງສະເໜີມາ;
3. ຄົ້ນຄວ້າກ່ຽວກັບການຕີຄວາມໝາຍ, ອະທິບາຍກົດໝາຍທີ່ກ່ຽວຂ້ອງກັບກຳມາທິການຂອງຕົນ ເພື່ອສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;
4. ເຂົ້າຮ່ວມແຕ່ຫົວທີກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ປະກອບຄວາມເຫັນໃສ່ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ໃນຂະແໜງການທີ່ຕົນຮັບຜິດຊອບ;

5. ຄົ້ນຄວ້າກ່ຽວກັບການໂຈະການຈັດຕັ້ງປະຕິບັດ, ການປັບປຸງ, ຍົກເລີກ, ລຶບລ້າງ ກົດໝາຍ ແລະ ນິຕິກຳອື່ນ;
6. ເກັບກຳ, ວິເຄາະຂໍ້ມູນ-ຂ່າວສານ ກ່ຽວກັບບັນຫາໃດໜຶ່ງຂອງຂະແໜງການທີ່ຕົນຮັບຜິດຊອບ ເພື່ອສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງແກ້ໄຂໃຫ້ຖືກຕ້ອງ ແລະ ຕິດຕາມກວດກາຜົນການແກ້ໄຂບັນຫາ ດັ່ງກ່າວ.

   ຂະແໜງການ ດັ່ງກ່າວ ຕ້ອງສະໜອງຂໍ້ມູນ-ຂ່າວສານ ໃຫ້ກຳມາທິການທີ່ກ່ຽວຂ້ອງຢ່າງຄົບຖ້ວນ, ທັນເວລາ ຕາມການສະເໜີຂອງກຳມາທິການນັ້ນ;
7. ຄົ້ນຄວ້າກ່ຽວກັບການໃຫ້ສັດຕະຍາບັນ ຫລື ລຶບລ້າງການເຂົ້າຮ່ວມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນໃນລະດັບລັດ ໃນຂົງເຂດຄວາມຮັບຜິດຊອບຂອງກຳມາທິການຕົນ;
8. ສະເໜີການແຕ່ງຕັ້ງໜ່ວຍງານສະເພາະກິດ ເມື່ອມີຄວາມຈຳເປັນ ບົນພື້ນຖານການເຫັນດີ ຫລື ການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ;
9. ສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ກ່ຽວກັບບັນຫາ ແລະ ມາດຕະການແກ້ໄຂທີ່ພົວພັນກັບວຽກງານຂອງຕົນ;
10. ຮັບຕ້ອນ, ຈັດກອງປະຊຸມ ເພື່ອຮັບຟັງຄຳຄິດຄຳເຫັນຂອງປະຊາຊົນ ແລະ ອົງການຈັດຕັ້ງສັງຄົມ ກ່ຽວກັບບັນຫາສຳຄັນຕ່າງໆ;
11. ພົວພັນ, ຮ່ວມມືກັບລັດຖະສະພາພາກພື້ນ, ສາກົນ ແລະ ອົງການຈັດຕັ້ງຕ່າງປະເທດ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ;
12. ສະຫລຸບ,ຖອດຖອນບົດຮຽນ ແລະ ລາຍງານການເຄື່ອນໄຫວຂອງກຳມາທິການຕົນ ໃຫ້ຄະນະປະຈຳສະພາແຫ່ງຊາດ;
13. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງປະທານສະພາແຫ່ງຊາດ ຫລື ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 41. ສິດ ແລະ ໜ້າທີ່ສະເພາະຂອງແຕ່ລະກຳມາທິການ**

ສິດ ແລະ ໜ້າທີ່ສະເພາະຂອງແຕ່ລະກຳມາທິການ ແມ່ນ ຄະນະປະຈຳສະພາແຫ່ງຊາດເປັນຜູ້ກຳນົດ.

**ມາດຕາ 42. ໂຄງປະກອບຂອງກຳມາທິການສະພາແຫ່ງຊາດ**

**ໂຄງປະກອບບຸກຄະລາກອນຂອງກຳມາທິການສະພາແຫ່ງຊາດ ມີ ດັ່ງນີ້:**

- ປະທານ;
- ຮອງປະທານ;
- ກຳມະການ.

**ມາດຕາ 43(ປັບປຸງ). ການແບ່ງຄວາມຮັບຜິດຊອບພາຍໃນກຳມາທິການຂອງສະພາແຫ່ງຊາດ**

ປະທານກຳມາທິການຂອງສະພາແຫ່ງຊາດ ເປັນຜູ້ຊີ້ນຳວຽກງານ ແລະ ນຳພາກອງປະຊຸມຂອງກຳມາທິການ, ຕາງໜ້າໃຫ້ກຳມາທິການລາຍງານ ແລະ ສະເໜີວຽກງານຕໍ່ຄະນະປະຈຳ ແລະ ກອງປະຊຸມ ສະພາແຫ່ງຊາດ.

ຮອງປະທານກຳມາທິການ ເປັນຜູ້ຊ່ວຍປະທານກຳມາທິການ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງກຳມາທິການ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານກຳມາທິການ.

ໃນກໍລະນີທີ່ປະທານກຳມາທິການຕິດຂັດ ແມ່ນ ຮອງປະທານກຳມາທິການຜູ້ທີ່ຖືກມອບໝາຍຈາກປະທານກຳມາທິການເປັນຜູ້ວ່າການແທນ.

ກຳມະການ ຂອງກຳມາທິການ ປະຕິບັດສິດ ແລະ ໜ້າທີ່ ຂອງກຳມາທິການທີ່ຕົນສັງກັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ຕາມການມອບໝາຍ ຂອງປະທານກຳມາທິການ.

**ມາດຕາ44(ໃໝ່). ກອງປະຊຸມຂອງກຳມາທິການ**

**ກອງປະຊຸມຂອງກຳມາທິການ ມີ ສອງ ປະເພດ ດັ່ງນີ້:**

1. ກອງປະຊຸມກຳມາທິການ;
2. ກອງປະຊຸມຄົບຄະນະຂອງກຳມາທິການ.

**ມາດຕາ45(ໃໝ່). ກອງປະຊຸມກຳມາທິການ**

ກອງປະຊຸມກຳມາທິການ ແມ່ນ ກອງປະຊຸມປຶກສາຫາລືວຽກງານເປັນປົກກະຕິ ທີ່ເປີດຂຶ້ນຢ່າງໜ້ອຍເດືອນລະເທື່ອ ໂດຍແມ່ນປະທານກຳມາທິການເປັນຜູ້ຮຽກໂຮມ ຊຶ່ງມີຮອງປະທານ ແລະ ກົມທີ່ກ່ຽວຂ້ອງເຂົ້າຮ່ວມ.

**ກອງປະຊຸມກຳມາທິການ ມີເນື້ອໃນຕົ້ນຕໍ ດັ່ງນີ້:**

1. ຜ່ານບົດສະຫລຸບ ແລະ ແຜນການເຄື່ອນໄຫວປະຈຳເດືອນ, ສາມເດືອນ, ຫົກເດືອນຂອງກຳມາທິການ;
2. ຄົ້ນຄວ້າສ້າງຮ່າງນິຕິກຳທີ່ພົວພັນກັບວຽກງານຂອງກຳມາທິການ;
3. ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ຮ່າງນິຕິກຳຕ່າງໆ ຂອງບັນດາກຳມາທິການ ອື່ນ ຫລື ຂອງຄະນະປະຈຳສະພາແຫ່ງຊາດ;
4. ປຶກສາຫາລື ກ່ຽວກັບການປະຕິບັດວຽກງານຕົວຈິງ ເປັນຕົ້ນ ວິທີການ ແລະ ຮູບການຕິດຕາມກວດກາໃນຂົງເຂດທີ່ກຳມາທິການຮັບຜິດຊອບ;
5. ຄົ້ນຄວ້າ, ວິໄຈ ສະພາບການ, ບັນຫາທີ່ພົ້ນເດັ່ນທີ່ພົວພັນກັບກຳມາທິການຕົນ ແລະ ສະເໜີ ມາດຕະການແກ້ໄຂ ເພື່ອລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ແລະ ໃຫ້ທິດຊີ້ນຳ;

6. ຮັບຟັງການລາຍງານຂອງຂະແໜງການ ແລະ ອົງການທີ່ກ່ຽວຂ້ອງ ກ່ຽວກັບບັນຫາທີ່ສົນໃຈ ແລະ ປະກອບຄຳຄິດ ຄຳເຫັນ, ໃຫ້ທິດຊີ້ນຳ ກ່ຽວກັບການແກ້ໄຂບັນຫາທີ່ຍັງຄ້າງຄາ;
7. ກະກຽມກອງປະຊຸມຄົບຄະນະຂອງກຳມາທິການ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະພາແຫ່ງຊາດ ແລະ ວຽກງານອື່ນ ທີ່ຈຳເປັນ;
8. ຄົ້ນຄວ້າ, ພິຈາລະນາ ກ່ຽວກັບການສະເໜີ ບຳລຸງສ້າງ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ພະນັກງານຂອງກົມທີ່ກ່ຽວຂ້ອງຕາມການສະເໜີຂອງຫ້ອງວ່າການສະພາແຫ່ງຊາດ.

### ມາດຕາ 46(ປັບປຸງ). ກອງປະຊຸມຄົບຄະນະຂອງກຳມາທິການ

ກອງປະຊຸມຄົບຄະນະຂອງກຳມາທິການ ແມ່ນ ກອງປະຊຸມສະຫລຸບຕີລາຄາວຽກງານປະຈຳປີຂອງກຳມາທິການ ຊຶ່ງເປີດຂຶ້ນຢ່າງໜ້ອຍປີລະເທື່ອ ໂດຍການຮຽກໂຮມ ແລະ ການເປັນປະທານຂອງປະທານກຳມາທິການທີ່ກ່ຽວຂ້ອງ ຕາມການເຫັນດີຂອງຄະນະປະຈຳສະພາແຫ່ງຊາດ ຊຶ່ງມີກຳມະການເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນກຳມະການທັງໝົດ.

ໃນກໍລະນີທີ່ຈຳເປັນ ກອງປະຊຸມຄົບຄະນະຂອງກຳມາທິການໃດໜຶ່ງຈະເປີດຂຶ້ນໃນເວລາໃດກໍໄດ້ ຫລື ຈະເປີດຮ່ວມກັບກຳມາທິການອື່ນ ແລະ ເຊີນບຸກຄົນ, ກຳມາທິການອື່ນທີ່ກ່ຽວຂ້ອງເຂົ້າຮ່ວມປະຊຸມນຳກໍໄດ້ ຕາມການເຫັນດີຂອງຄະນະປະຈຳສະພາແຫ່ງຊາດ.

ກອງປະຊຸມຄົບຄະນະຂອງກຳມາທິການ ຕົ້ນຕໍ ແມ່ນ ພິຈາລະນາບົດລາຍງານການເຄື່ອນໄຫວວຽກງານໃນໄລຍະຜ່ານມາ ແລະ ທິດທາງວຽກງານໃນຕໍ່ໜ້າຂອງກຳມາທິການ, ພິຈາລະນາຮ່າງກົດໝາຍ, ນິຕິກຳ ແລະ ວຽກງານອື່ນ ໃນຂົງເຂດທີ່ຕົນຮັບຜິດຊອບ.

ກອງປະຊຸມຄົບຄະນະຂອງກຳມາທິການ ມີມະຕິຂອງກອງປະຊຸມ. ມະຕິດັ່ງກ່າວ ຈະມີຄຸນຄ່າໄດ້ກໍຕໍ່ເມື່ອ ໄດ້ຮັບຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນກຳມະການທີ່ເຂົ້າຮ່ວມກອງປະຊຸມ.

ກອງປະຊຸມຄົບຄະນະຂອງກຳມາທິການ ຕ້ອງເຮັດບົດບັນທຶກ ໂດຍມີລາຍເຊັນຂອງຜູ້ບັນທຶກ ແລະ ລາຍເຊັນຢັ້ງຢືນຂອງປະທານກອງປະຊຸມ ພ້ອມທັງລາຍງານຜົນສຳເລັດ ຂອງກອງປະຊຸມໃຫ້ຄະນະປະຈຳສະພາແຫ່ງຊາດ ຊາບ.

### ມາດຕາ 47. ຕາປະທັບຂອງກຳມາທິການຂອງສະພາແຫ່ງຊາດ

ກຳມາທິການຂອງສະພາແຫ່ງຊາດ ມີຕາປະທັບສະເພາະຂອງຕົນເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສະພາແຫ່ງຊາດ", ເບື້ອງລຸ່ມຂຽນຊື່ຂອງກຳມາທິການ ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

# ໝວດທີ VIII
## ຫ້ອງວ່າການສະພາແຫ່ງຊາດ

**ມາດຕາ 48. ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງວ່າການສະພາແຫ່ງຊາດ**

ຫ້ອງວ່າການສະພາແຫ່ງຊາດ ແມ່ນ ກົງຈັກບໍລິຫານຂອງສະພາແຫ່ງຊາດ, ມີພາລະບົດບາດເປັນເສນາທິການ ໃຫ້ແກ່ສະພາແຫ່ງຊາດ ໃນການຄຸ້ມຄອງວຽກງານ ບໍລິຫານ, ແຜນການ ແລະ ການເງິນ, ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ.

**ມາດຕາ 49(ປັບປຸງ). ໂຄງປະກອບຂອງຫ້ອງວ່າການສະພາແຫ່ງຊາດ**

**ໂຄງປະກອບຂອງຫ້ອງວ່າການສະພາແຫ່ງຊາດ ມີ ດັ່ງນີ້:**

- ຫົວໜ້າ;
- ຮອງຫົວໜ້າ;
- ບັນດາກົມ ແລະ ການຈັດຕັ້ງອື່ນທີ່ຂຶ້ນກັບ.

**ມາດຕາ 50(ໃໝ່). ສິດ ແລະ ໜ້າທີ່ ຂອງຫ້ອງວ່າການ**

**ຫ້ອງວ່າການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຂຶ້ນແຜນງົບປະມານຂອງສະພາແຫ່ງຊາດ ເພື່ອຜ່ານກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາ;
2. ກະກຽມ, ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດເພດຍິງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາແຫ່ງຊາດ;
3. ຈັດຕັ້ງ, ນຳພາ, ຄຸ້ມຄອງ, ບຳລຸງສ້າງ ແລະ ປະຕິບັດນະໂຍບາຍຕໍ່ ພະນັກງານ, ລັດຖະກອນຂອງສະພາແຫ່ງຊາດ;
4. ຄຸ້ມຄອງການນຳໃຊ້ງົບປະມານ, ວັດຖຸອຸປະກອນ ແລະ ຊັບສິນບັດຂອງສະພາແຫ່ງຊາດ;
5. ຮັບຜິດຊອບຄວາມເປັນລະບຽບຮຽບຮ້ອຍຂອງສຳນັກງານສະພາແຫ່ງຊາດ;
6. ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ຮອງຫົວໜ້າກົມ ແລະ ການຈັດຕັ້ງອື່ນທີ່ຂຶ້ນກັບ;
7. ຈັດຕັ້ງ ກອງປະຊຸມ, ສຳມະນາ ເພື່ອລະດົມຄວາມຄິດເຫັນກ່ຽວກັບບັນຫາຕ່າງໆ ທີ່ເຫັນວ່າຈຳເປັນ ໃນຂອບເຂດວຽກງານຂອງຕົນ;

8. ອອກແຈ້ງການ, ແຈ້ງຂ່າວ, ຄຳແນະນຳ ກ່ຽວກັບການຕົກລົງບັນຫາຕ່າງໆ ຕາມການຊີ້ນຳຂອງປະທານສະພາແຫ່ງຊາດ ຫລື ຄະນະປະຈຳສະພາແຫ່ງຊາດ;
9. ຊີ້ນຳ, ຕິດຕາມກວດກາ ແລະ ຊຸກຍູ້ການເຄື່ອນໄຫວວຽກງານຂອງຫ້ອງວ່າການສະພາແຫ່ງຊາດປະຈຳເຂດເລືອກຕັ້ງ;
10. ຊີ້ນຳ, ຄຸ້ມຄອງວຽກງານຂອງກົມ ແລະ ການຈັດຕັ້ງອື່ນ ທີ່ຂຶ້ນກັບຕົນທາງດ້ານບໍລິຫານ;
11. ພົວພັນ ແລະ ປະສານສົມທົບກັບບັນດາກຳມາທິການຂອງສະພາແຫ່ງຊາດ, ຫ້ອງວ່າການສູນກາງພັກ, ຫ້ອງວ່າການສຳນັກງານປະທານປະເທດ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ອົງການຈັດຕັ້ງອື່ນ ທີ່ກ່ຽວຂ້ອງ ກ່ຽວກັບວຽກງານບໍລິຫານ, ຄຸ້ມຄອງງົບປະມານ, ການເງິນ ແລະ ການຈັດຕັ້ງ-ພະນັກງານ;
12. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມການຊີ້ນຳຂອງຄະນະປະຈຳສະພາແຫ່ງຊາດ;
13. ສະຫລຸບ, ລາຍງານການເຄື່ອນໄຫວຂອງຕົນ ຕໍ່ ຄະນະປະຈຳສະພາແຫ່ງຊາດ ຢ່າງເປັນປົກກະຕິ;
14. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ ຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 51. ສິດ ແລະ ໜ້າທີ່ ຂອງບັນດາກົມ ແລະການຈັດຕັ້ງອື່ນ**

ສິດ ແລະ ໜ້າທີ່ຂອງບັນດາກົມ ແລະ ການຈັດຕັ້ງອື່ນທີ່ຂຶ້ນກັບຫ້ອງວ່າການສະພາແຫ່ງຊາດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 52(ປັບປຸງ). ຕາປະທັບຂອງຫ້ອງວ່າການສະພາແຫ່ງຊາດ**

ຫ້ອງວ່າການສະພາແຫ່ງຊາດ ມີຕາປະທັບສະເພາະຂອງຕົນ ຊຶ່ງເປັນຮູບວົງມົນ, ຢູ່ໃນກາງວົງມົນ ມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງ ຂຽນວ່າ " ສະພາແຫ່ງຊາດ " ເບື້ອງລຸ່ມຂຽນວ່າ "ຫ້ອງວ່າການ " ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ໝວດທີ IX
## ຄະນະສະມາຊິກສະພາແຫ່ງຊາດເພດຍິງ

**ມາດຕາ 53(ໃໝ່). ທີ່ຕັ້ງ ແລະ ພາລະບົດບາດຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ**

ຄະນະສະມາຊິກສະພາແຫ່ງຊາດເພດຍິງ ແມ່ນ ອົງການຈັດຕັ້ງໜຶ່ງຂອງສະພາແຫ່ງຊາດທີ່ຂຶ້ນໂດຍກົງກັບຄະນະປະຈຳສະພາແຫ່ງຊາດ, ປະຕິບັດພາລະບົດບາດເປັນເສນາທິການ ໃຫ້ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ໃນການຄົ້ນຄວ້າ, ເຂົ້າຮ່ວມການປະຕິບັດ ກ່ຽວກັບການເຊື່ອມບົດບາດຍິງ-ຊາຍ ເຂົ້າໃນຂະບວນການສ້າງ, ປັບປຸງກົດໝາຍ, ໃນການຕິດຕາມກວດກາການ

ຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ນະໂຍບາຍ ກ່ຽວກັບສິດສະເໝີພາບຍິງ-ຊາຍ, ການສົ່ງເສີມວຽກງານຄວາມກ້າວໜ້າຂອງແມ່ຍິງ, ວຽກງານແມ່ ແລະ ເດັກ.

**ມາດຕາ 54(ໃໝ່). ສິດ, ໜ້າທີ່ ແລະ ໂຄງປະກອບ ຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ**

ສິດ, ໜ້າທີ່, ໂຄງປະກອບ ແລະ ກົງຈັກຊ່ວຍວຽກ ຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ ແມ່ນ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດ.

## ໝວດທີ X
## ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ

**ມາດຕາ 55(ປັບປຸງ). ທີ່ຕັ້ງ ແລະ ພາລະບົດບາດຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ**

ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແມ່ນ ອົງການຈັດຕັ້ງໜຶ່ງຂອງສະພາແຫ່ງຊາດປະຈຳແຕ່ລະເຂດເລືອກຕັ້ງ, ເປັນເສນາທິການໃຫ້ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ, ມີພາລະບົດບາດເປັນຕົວແທນຂອງສະພາແຫ່ງຊາດ ຕົກລົງບັນຫາສຳຄັນຂອງແຂວງ, ນະຄອນ ແລະ ຕິດຕາມກວດກາການເຄື່ອນໄຫວ ຂອງລະບົບອຳນາດແຫ່ງລັດ ຂັ້ນທ້ອງຖິ່ນ ໃນເຂດເລືອກຕັ້ງຂອງຕົນ ໃນການປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ມະຕິຂອງກອງປະຊຸມສະພາແຫ່ງຊາດ ແລະ ຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 56(ປັບປຸງ). ສິດ ແລະ ໜ້າທີ່ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ**

ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ປະຕິບັດສິດ ແລະ ໜ້າທີ່ ດັ່ງນີ້:

1. ກະກຽມ ແລະ ເປີດກອງປະຊຸມຄົບຄະນະຂອງຕົນ ຢ່າງໜ້ອຍ ປີລະເທື່ອ ເພື່ອຮັບຟັງບົດລາຍງານ ແລະ ຮັບຮອງເອົາບົດສະຫລຸບປະຈຳປີ ແລະ ທິດທາງວຽກງານ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂັ້ນທ້ອງຖິ່ນໃນຕໍ່ໜ້າ, ຜ່ານບົດສະຫລຸບ ແລະ ທິດທາງວຽກງານຂອງຄະນະສະມາຊິກສະພາແຫ່ງຊາດຂອງເຂດເລືອກຕັ້ງຕົນ; ກອງປະຊຸມ ດັ່ງກ່າວ ຕ້ອງໃຫ້ສຳເລັດກ່ອນການເປີດກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ແຕ່ລະເທື່ອຢ່າງຊ້າ ສອງ ເດືອນ;
2. ຊັກຖາມເຈົ້າແຂວງ, ເຈົ້າຄອງນະຄອນ, ຫົວໜ້າພະແນກການ, ປະທານສານປະຊາຊົນ, ຫົວໜ້າອົງການໄອຍະການປະຊາຊົນຂັ້ນທ້ອງຖິ່ນ, ຫົວໜ້າອົງການກວດສອບປະຈຳພາກ ໃນວຽກງານທີ່ຕົນສົນໃຈ;
3. ເຂົ້າຮ່ວມກອງປະຊຸມຂອງອົງການປົກຄອງທ້ອງຖິ່ນ ໃນເຂດເລືອກຕັ້ງຕົນ ເພື່ອຮັບຟັງ ແລະ ປະກອບຄຳເຫັນກ່ຽວກັບການແບ່ງປັນງົບປະມານປະຈຳສົກປີ ໃຫ້ແຕ່ລະຂົງເຂດວຽກງານ ພາຍຫລັງທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ;

4. ພິຈາລະນາ ແລະ ຮັບຮອງ ນິຕິກຳທີ່ສຳຄັນຂອງແຂວງ, ນະຄອນ ແລະ ປະກອບຄຳເຫັນຕໍ່ຮ່າງກົດໝາຍຕ່າງໆ;
5. ເຂົ້າຮ່ວມແຕ່ທົ່ວທີ ໃນການຄົ້ນຄວ້າແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ໃນເຂດເລືອກຕັ້ງຂອງຕົນ ໂດຍໜ້າທີ່ ແລະ ຕາມການເຊີນ;
6. ສ້າງແຜນການເຄື່ອນໄຫວວຽກງານຂອງຕົນ ໃນແຕ່ລະໄລຍະ;
7. ໂຄສະນາ, ເຜີຍແຜ່ ແນວທາງຂອງພັກ, ນະໂຍບາຍ, ກົດໝາຍ, ນິຕິກຳອື່ນຂອງລັດ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ຂອງຄະນະປະຈຳສະພາແຫ່ງຊາດ ແລະ ປຸກລະດົມປະຊາຊົນບັນດາເຜົ່າເຂົ້າຮ່ວມໃນການຈັດຕັ້ງປະຕິບັດ;
8. ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງທ້ອງຖິ່ນ ແລະ ໂຄງການລະດັບແຂວງ;
9. ຮັບຕ້ອນ, ຈັດກອງປະຊຸມ ເພື່ອຮັບຟັງຄຳຄິດຄຳເຫັນຂອງປະຊາຊົນ ແລະ ອົງການຈັດຕັ້ງສັງຄົມ ກ່ຽວກັບບັນຫາສຳຄັນຕ່າງໆ;
10. ລາຍງານ ຕໍ່ ຄະນະປະຈຳສະພາແຫ່ງຊາດກ່ຽວກັບການເຄື່ອນໄຫວ ຫລື ການປະພຶດ ທີ່ບໍ່ຖືກຕ້ອງຂອງພະນັກງານ ຫລື ການຈັດຕັ້ງ ຂອງລະບົບອຳນາດແຫ່ງລັດຢູ່ທ້ອງຖິ່ນ;
11. ຊີ້ນຳ, ນຳພາການເຄື່ອນໄຫວວຽກງານຂອງສະມາຊິກສະພາແຫ່ງຊາດ ແລະ ຫ້ອງວ່າການສະພາແຫ່ງຊາດປະຈຳເຂດເລືອກຕັ້ງ;
12. ຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ຕາມພາລະບົດບາດຂອງຕົນ;
13. ພົວພັນ ແລະ ປະສານສົມທົບກັບຂະແໜງການ, ອົງການຈັດຕັ້ງອື່ນ ແຕ່ຂັ້ນແຂວງລົງຮອດບ້ານ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ; ໃນກໍລະນີທີ່ຈຳເປັນອາດເຊີນພາກສ່ວນທີ່ກ່ຽວຂ້ອງມາໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບບັນຫາໃດໜຶ່ງກໍໄດ້;
14. ເຂົ້າຮ່ວມກອງປະຊຸມ, ການເຄື່ອນໄຫວ ແລະ ພິທີທີ່ສຳຄັນຕ່າງໆ ຂອງອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມຕ່າງໆ ໂດຍໜ້າທີ່ ແລະ ຕາມການເຊີນ;
15. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ ແລະ ຂອງອົງການປົກຄອງແຂວງ, ນະຄອນ;
16. ສະຫລຸບ, ລາຍງານການເຄື່ອນໄຫວວຽກງານຂອງຕົນ ໃຫ້ຄະນະປະຈຳສະພາແຫ່ງຊາດ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງຢ່າງເປັນປົກກະຕິ;
17. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 57(ປັບປຸງ). ໂຄງປະກອບຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ**

**ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ມີ ດັ່ງນີ້:**

- ສະມາຊິກສະພາແຫ່ງຊາດ ຢູ່ໃນເຂດເລືອກຕັ້ງ,
- ປະທານ;
- ຮອງປະທານ;
- ສະມາຊິກສະພາແຫ່ງຊາດປະຈຳການ;
- ຫ້ອງວ່າການສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ.

**ມາດຕາ 58(ປັບປຸງ). ການແບ່ງຄວາມຮັບຜິດຊອບພາຍໃນຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ**

ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເປັນຜູ້ຊີ້ນຳ ນຳພາວຽກງານລວມ, ເປັນປະທານກອງປະຊຸມຂອງ ຄະນະສະມາຊິກສະພາແຫ່ງຊາດ, ຕາງໜ້າໃຫ້ຄະນະລາຍງານ ແລະ ສະເໜີວຽກງານຕໍ່ຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະພາແຫ່ງຊາດ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ.

ຮອງປະທານເປັນຜູ້ຊ່ວຍປະທານໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ເປັນຜູ້ຊີ້ນຳ ແລະ ນຳພາ ການແກ້ໄຂ ວຽກງານປະຈຳວັນຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ.

ໃນກໍລະນີທີ່ປະທານຕິດຂັດ ແມ່ນຮອງປະທານເປັນຜູ້ວ່າການແທນ ຕາມການມອບໝາຍຂອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ.

ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແບ່ງຄວາມຮັບຜິດຊອບ ໃຫ້ສະມາຊິກສະພາແຫ່ງຊາດ ເປັນຕົ້ນ ສະມາຊິກສະພາແຫ່ງຊາດປະຈຳການ ຢ່າງເໝາະສົມ ຕາມຂົງເຂດວຽກງານ ດັ່ງນີ້:

- ກົດໝາຍ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
- ເສດຖະກິດ, ແຜນການ ແລະ ການເງິນ, ວັດທະນະທຳ-ສັງຄົມ;
- ບັນດາເຜົ່າ, ການຕ່າງປະເທດ.

**ມາດຕາ 59(ໃໝ່). ກອງປະຊຸມຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ**

**ກອງປະຊຸມຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ມີ ສອງ ປະເພດ ດັ່ງນີ້:**

- ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ;
- ກອງປະຊຸມຄົບຄະນະຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ.

**ມາດຕາ 60(ໃໝ່). ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ**

ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ ແມ່ນ ກອງປະຊຸມປຶກສາຫາລືວຽກງານເປັນປົກກະຕິ ທີ່ເປີດຂຶ້ນ ຢ່າງໜ້ອຍເດືອນລະເທື່ອ ໂດຍແມ່ນປະທານຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງເປັນຜູ້ຮຽກໂຮມ ຊຶ່ງມີຮອງປະທານ, ສະມາຊິກສະພາແຫ່ງຊາດປະຈໍາການ ແລະ ພະນັກງານຂອງຫ້ອງວ່າການເຂົ້າຮ່ວມ.

**ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ ມີເນື້ອໃນຕົ້ນຕໍ ດັ່ງນີ້:**

1. ຜ່ານບົດສະຫລຸບ ແລະ ແຜນການເຄື່ອນໄຫວປະຈໍາເດືອນ, ສາມເດືອນ, ຫົກເດືອນ ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ;
2. ຄົ້ນຄວ້າ ແລະ ປະກອບຄໍາເຫັນໃສ່ຮ່າງກົດໝາຍ ທີ່ຄະນະປະຈໍາສະພາແຫ່ງຊາດ ສົ່ງໃຫ້, ນິຕິກໍາຂອງທ້ອງຖິ່ນ ປະຈໍາເຂດເລືອກຕັ້ງຂອງຕົນ;
3. ປຶກສາຫາລື ກ່ຽວກັບການປະຕິບັດວຽກງານຕົວຈິງ ເປັນຕົ້ນ ວິທີການ ແລະ ຮູບການຕິດຕາມກວດກາໃນເຂດເລືອກຕັ້ງຂອງຕົນ;
4. ຄົ້ນຄວ້າ, ວິໄຈ ສະພາບການ, ບັນຫາທີ່ພົ້ນເດັ່ນໃນເຂດເລືອກຕັ້ງຂອງຕົນ ແລະ ສະເໜີໃຫ້ອົງການປົກຄອງທ້ອງຖິ່ນ ຫລື ຄະນະປະຈໍາສະພາແຫ່ງຊາດ ພິຈາລະນາ ແລະ ໃຫ້ທິດຊີ້ນໍາ;
5. ຮັບຟັງການລາຍງານຂອງຂະແໜງການ ແລະ ອົງການທີ່ກ່ຽວຂ້ອງ ກ່ຽວກັບບັນຫາທີ່ຕົນສົນໃຈ ແລະ ປະກອບຄໍາຄິດ ຄໍາເຫັນ, ໃຫ້ທິດຊີ້ນໍາ ກ່ຽວກັບການແກ້ໄຂບັນຫາທີ່ຍັງຄ້າງຄາ;
6. ກະກຽມກອງປະຊຸມຄົບຄະນະຂອງຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ ແລະ ວຽກງານອື່ນ ທີ່ມີຄວາມຈໍາເປັນ;
7. ຄົ້ນຄວ້າ, ພິຈາລະນາ ກ່ຽວກັບການສະເໜີ ບໍາລຸງສ້າງ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕໍາແໜ່ງ ພະນັກງານຂອງຫ້ອງວ່າການສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ.

**ມາດຕາ 61(ປັບປຸງ). ກອງປະຊຸມຄົບຄະນະຂອງຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ**

ກອງປະຊຸມຄົບຄະນະຂອງຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ ແມ່ນ ກອງປະຊຸມເປີດຂຶ້ນຢ່າງໜ້ອຍປີລະເທື່ອ ໂດຍການຮຽກໂຮມ ແລະ ເປັນປະທານຂອງປະທານຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ ຕາມການເຫັນດີຂອງຄະນະປະຈໍາສະພາແຫ່ງຊາດ ຊຶ່ງມີສະມາຊິກສະພາແຫ່ງຊາດທັງໝົດທີ່ສັງກັດຢູ່ເຂດເລືອກຕັ້ງນັ້ນເຂົ້າຮ່ວມ.

ໃນກອງປະຊຸມດັ່ງກ່າວ ຕ້ອງເຊີນເຈົ້າແຂວງ, ຫົວໜ້າພະແນກການ, ອົງການ, ຜູ້ຊົງຄຸນວຸດທິ, ນັກທຸລະກິດ ແລະ ບຸກຄົນອື່ນ ທີ່ກ່ຽວຂ້ອງເຂົ້າຮ່ວມ.

**ກອງປະຊຸມຄົບຄະນະຂອງຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ ມີເນື້ອໃນຕົ້ນຕໍ ດັ່ງນີ້:**

- ພິຈາລະນາ ແລະ ຮັບຮອງ ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ແລະ ທິດທາງແຜນການພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ໃນທ້ອງຖິ່ນຂອງຕົນ;

- ພິຈາລະນາ ແລະ ຮັບຮອງ ບົດສະຫລຸບຕີລາຄາວຽກງານຂອງຕົນ ໃນໄລຍະໜຶ່ງໄປຜ່ານມາ ແລະ ທິດທາງວຽກງານໃນປີຕໍ່ໄປ;

- ພິຈາລະນາ ແລະ ຮັບຮອງ ບົດລາຍງານ ກ່ຽວກັບການຕິດຕາມກວດກາຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ບົດກວດສອບຂອງອົງການກວດສອບປະຈຳພາກທີ່ພົວພັນເຖິງເຂດເລືອກຕັ້ງຂອງຕົນ.

ກອງປະຊຸມຄົບຄະນະຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ຕ້ອງເຮັດບົດບັນທຶກ ໂດຍມີການເຊັນຂອງຜູ້ບັນທຶກ ແລະ ການເຊັນຢັ້ງຢືນຂອງປະທານກອງປະຊຸມ ພ້ອມທັງລາຍງານຜົນ ສຳເລັດ ຂອງກອງປະຊຸມໃຫ້ຄະນະປະຈຳສະພາແຫ່ງຊາດ.

ກອງປະຊຸມຄົບຄະນະຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ມີມະຕິຂອງກອງປະຊຸມ ແລະ ໃຫ້ປະຕິບັດຕາມມາດຕາ 32 ຂອງກົດໝາຍສະບັບນີ້.

### ມາດຕາ 62(ປັບປຸງ). ຫ້ອງວ່າການສະພາແຫ່ງຊາດປະຈຳເຂດເລືອກຕັ້ງ

ຫ້ອງວ່າການສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ມີຖານະທຽບເທົ່າຫ້ອງວ່າການ ຂັ້ນແຂວງ, ປະຕິບັດພາລະບົດບາດ ເປັນເສນາທິການ ໃຫ້ແກ່ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງຂອງຕົນ ໃນການຄົ້ນຄວ້າ, ສັງລວມ ເນື້ອໃນວຽກງານຮອບດ້ານ, ຄຸ້ມຄອງວຽກງານບໍລິຫານ, ແຜນການ ແລະ ການເງິນ, ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ.

### ມາດຕາ 63. ໂຄງປະກອບ, ສິດ, ໜ້າທີ່ ແລະ ຕາປະທັບຂອງຫ້ອງວ່າການສະພາແຫ່ງຊາດປະຈຳເຂດເລືອກຕັ້ງ

ໂຄງປະກອບ, ສິດ, ໜ້າທີ່ ແລະ ຕາປະທັບຂອງຫ້ອງວ່າການສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແມ່ນ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດ.

### ມາດຕາ 64. ຕາປະທັບຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ

ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ມີ ຕາປະທັບສະເພາະຂອງຕົນເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງ ຊຽນວ່າ " ສະພາແຫ່ງຊາດ ", ຢູ່ເບື້ອງລຸ່ມຊຽນວ່າ "ຄະນະສະມາຊິກສະພາແຫ່ງຊາດເຂດເລືອກຕັ້ງທີ... ແຂວງ ຫລື ນະຄອນ... " ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ໝວດທີ XI
## ລະບອບວິທີເຮັດວຽກຂອງສະພາແຫ່ງຊາດ

### ມາດຕາ 65(ປັບປຸງ). ລະບອບເຮັດວຽກ

ສະພາແຫ່ງຊາດ, ຄະນະປະຈຳ, ບັນດາກຳມາທິການ, ຫ້ອງວ່າການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດເພດຍິງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເຮັດວຽກຕາມລະບອບລວມສູນປະຊາທິປະໄຕ ໂດຍມີການສົມທົບລະຫວ່າງຄວາມຮັບຜິດຊອບ ຂອງໝູ່ຄະນະກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ,ເອົາກອງປະຊຸມເປັນບ່ອນປຶກສາຫາລື ແລະ ຕົກລົງບັນຫາຕາມສຽງສ່ວນຫລາຍ ບົນພື້ນຖານລັດຖະທຳມະນູນ ແລະ ກົດໝາຍ.

### ມາດຕາ 66(ປັບປຸງ). ວິທີເຮັດວຽກ

ວິທີເຮັດວຽກຕົ້ນຕໍຂອງສະພາແຫ່ງຊາດ, ຄະນະປະຈຳ, ບັນດາກຳມາທິການ, ຫ້ອງວ່າການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດເພດຍິງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແມ່ນ ການດຳເນີນກອງປະຊຸມ, ມີການແບ່ງງານ ແລະ ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນ, ມີແຜນການ, ການກວດກາ, ສະຫລຸບ, ຖອດຖອນບົດຮຽນ ແລະ ປະຕິບັດລະບອບລາຍງານ, ຂໍຄວາມເຫັນຊີ້ນຳຈາກຂັ້ນເທິງຂອງຕົນ, ປະສານສົມທົບກັບການຈັດຕັ້ງຕ່າງໆ ພາຍໃນສະພາແຫ່ງຊາດ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ, ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມລະບຽບການ.

## ໝວດທີ XII
## ການສະເໜີ ແລະ ການພິຈາລະນາຮ່າງກົດໝາຍ

### ມາດຕາ 67. ການສະເໜີສ້າງ ຫລື ປັບປຸງກົດໝາຍ

ອົງການຈັດຕັ້ງທີ່ມີສິດສະເໜີສ້າງຮ່າງກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ກ່ອນຈະສ້າງຮ່າງກົດໝາຍ ຫລື ປັບປຸງກົດໝາຍໃດໜຶ່ງ ຕ້ອງເຮັດຄຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ໂດຍແຈ້ງຈຸດປະສົງ ແລະ ເຫດຜົນຂອງການສ້າງຮ່າງກົດໝາຍ ຫລື ປັບປຸງກົດໝາຍນັ້ນ.

ຄະນະປະຈຳສະພາແຫ່ງຊາດ ຕ້ອງຕອບຄຳສະເໜີ ດັ່ງກ່າວ ເປັນລາຍລັກອັກສອນຢ່າງຊ້າບໍ່ໃຫ້ເກີນສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳສະເໜີນັ້ນ ເປັນຕົ້ນໄປ.

### ມາດຕາ 68. ການສະເໜີຮ່າງກົດໝາຍຕໍ່ຄະນະປະຈຳສະພາແຫ່ງຊາດ

ອົງການຈັດຕັ້ງທີ່ໄດ້ສ້າງຮ່າງກົດໝາຍ ຫລື ປັບປຸງກົດໝາຍສຳເລັດແລ້ວ ຕ້ອງສະເໜີຮ່າງກົດໝາຍນັ້ນ ໃຫ້ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ຢ່າງຊ້າທີ່ກສິບວັນ ກ່ອນວັນເປີດກອງປະຊຸມສະພາແຫ່ງຊາດ.

**ມາດຕາ 69. ການຄົ້ນຄວ້າຮ່າງກົດໝາຍ**

ຄະນະປະຈຳສະພາແຫ່ງຊາດ ຈະມອບຮ່າງກົດໝາຍ ໃຫ້ກຳມາທິການທີ່ກ່ຽວຂ້ອງ ແລະ ແຕ່ງຕັ້ງອະນຸກຳມະການ ເພື່ອຄົ້ນຄວ້າລະອຽດ, ກວດກາຮອບດ້ານ ແລ້ວລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ.

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງກ່ຽວກັບການນຳເອົາຮ່າງກົດໝາຍນັ້ນ ໄປປຶກສາຫາລືນຳປະຊາຊົນດ້ວຍຮູບການຕ່າງໆ ແລ້ວນຳມາຄົ້ນຄວ້າ, ປັບປຸງຄືນກ່ອນທີ່ຈະນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ.

**ມາດຕາ 70. ການສະເໜີ ແລະ ການພິຈາລະນາຮ່າງກົດໝາຍໃນກອງປະຊຸມສະພາແຫ່ງຊາດ**

ປະທານກອງປະຊຸມສະພາແຫ່ງຊາດ ສະເໜີໃຫ້ຜູ້ຕາງໜ້າອົງການຈັດຕັ້ງທີ່ສ້າງ ຫລື ປັບປຸງຮ່າງກົດໝາຍ ຫຼື ປະທານກຳມາທິການທີ່ກ່ຽວຂ້ອງນັ້ນ ເປັນຜູ້ສະເໜີຮ່າງກົດໝາຍ ໂດຍສັງລວມຕໍ່ກອງປະຊຸມສະພາແຫ່ງຊາດ.

ປະທານກອງປະຊຸມສະພາແຫ່ງຊາດ ສະເໜີໃຫ້ອະນຸກຳມະການອະທິບາຍເນື້ອໃນທີ່ສຳຄັນຂອງຮ່າງກົດໝາຍ ເປັນແຕ່ລະພາກ, ໝວດ, ມາດຕາ, ຫລັງຈາກນັ້ນ ປະທານຈຶ່ງເຈາະຈີ້ມບັນຫາທີ່ເປັນພື້ນຖານຂອງຮ່າງກົດໝາຍ ເພື່ອໃຫ້ກອງປະຊຸມປະກອບຄວາມເຫັນ, ພິຈາລະນາ, ຮັບຮອງເອົາດ້ວຍການລົງຄະແນນສຽງ ປິດລັບ ຫລື ເປີດເຜີຍ.

## ໝວດທີ XIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 71(ປັບປຸງ). ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດຫມາຍສະບັບນີ້ ເປັນຕົ້ນໃນການປະຕິບັດມະຕິຕົກລົງຂອງກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ຈະໄດ້ຮັບການຍ້ອງຍໍ ຫລື ນະໂຍບາຍອື່ນ ຕາມລະບຽບການ .

**ມາດຕາ 72(ປັບປຸງ). ມາດຕາການຕໍ່ຜູ້ລະເມີດ**

ບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບກົດຫມາຍ ກ່ຽວກັບສະພາແຫ່ງຊາດ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ມາດຕະການທາງວິໄນ, ທາງແພ່ງ ຫລື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫລື ໜັກ.

## ໝວດທີ XIV
## ບົດບັນຍັດສຸດທ້າຍ

**ມາດຕາ 73. ວັນສ້າງຕັ້ງສະພາແຫ່ງຊາດ**

ວັນສ້າງຕັ້ງສະພາແຫ່ງຊາດ ແມ່ນ ວັນທີ 2 ທັນວາ 1975.

**ມາດຕາ 74. ກາໝາຍສະມາຊິກສະພາແຫ່ງຊາດ**

ກາໝາຍສະມາຊິກສະພາແຫ່ງຊາດ ແມ່ນ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດ.

**ມາດຕາ 75. ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ອອກຄຳແນະນຳຈັດຕັ້ງປະຕິບັດກົດໝາຍ ສະບັບນີ້.

**ມາດຕາ 76. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ 01 / ສພຊ ລົງວັນທີ 17 ມິຖຸນາ 2006.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ທອງສິງ ທຳມະວົງ